**Phonsavan** | *August 2022*

**ໂພນສະຫວັນ** | ເດືອນສິງຫາ 2022

ສະມາຄົມ

**ບັນຍາກາດໃໝ່ ໃບຫນ້າໃຫມ່ ໃນບັນດາໂຮງຫມໍແຮກສ່ຽວ**

**ໜ້າທີ 10**

ອາຫານການກິນ

**ການເດີນທາງກ້າວໄປຈະເປັນໂອກາດຫຼືເປັນຄວາມສ່ຽງອັນຕະລາຍ**

**ໜ້າທີ 14**

ຈາກບັນນາທິການ (Editorial)

# ພວກເຮົາຈະສືບຕໍ່ຮ່ວມມືກັນຕໍ່ໄປອີກ



ສະບາຍດີ!

"ຢູ່ໂດດດ່ຽວຈະຢຸດນິ້ງ, ຮ່ວມມືກັນຈະກ້າວຫນ້າ"; ພາຍໃຕ້ຄວາມຄິດດັ່ງກ່າວນີ້, ຈຶ່ງເປັນແຮງຍູ້ດັນໃຫ້ມີການສ້າງຕັ້ງ ສະມາຄົມໂຮງຫມໍແຮກສ່ຽວລະຫວ່າງ ໂຮງໝໍແຂວງຊຽງຂວາງ (XKH) (ທີ່ຢູ່ໂພນສະຫວັນ)ແລະ ໂຮງໝໍແຂວງ Winterthur (KSW-Kantonsspital Winterthur), ກ່ອນໜ້ານີ້ 11 ປີ ຂຶ້ນ. ເປົ້າຫມາຍກໍແມ່ນເພື່ອແລກປ່ຽນຄວາມຮູ້ທາງດ້ານການແພດ ແລະວັດທະນະທໍາ ແບບຍືນນານ, ຊຶ່ງມັນໄດ້ຢັ່ງຮາກເກາະກ່ຽວລົງເລິກໃນຈິດໃຈຂອງທີມງານໂຮງໝໍ KSW. ມັນເປັນໂຄງການທີ່ ທ່ານ Rolf Zehnder, ອະດີດອໍານວຍການ (CEO) ຂອງໂຮງໝໍ KSW ແລະ ປະທານສະມາຄົມໂຮງຫມໍແຮກສ່ຽວລະຫວ່າງໂຮງໝໍແຂວງຊຽງຂວາງ ແລະໂຮງໝໍ KSW, ໄດ້ສ້າງຕັ້ງຂຶ້ນດ້ວຍຈິດດ້ວຍໃຈ. ສະນັ້ນ, ມັນຈຶ່ງເປັນເລື້ອງທີ່ທຸກຄົນສາມາດເຂົ້າໃຈໄດ້ດີ ແລະແນ່ນອນຢູ່ແລ້ວ ທີ່ພວກເຮົາຈະສືບຕໍ່ດໍາເນີນໂຄງການນີ້ໄປຕໍ່ອີກ.

ຂ້າພະເຈົ້າ ຮູ້ສຶກດີໃຈ ແລະ ພູມໃຈເປັນຢ່າງຍິ່ງທີ່ ສາດສະດາຈານ ດຣ Stefan Breitenstein, ໜຶ່ງໃນຄະນະນໍາ ແລະ ທັງເປັນຫົວຫນ້າຮັບຜິດຊອບວິຊາການ (CMO) ຂອງໂຮງຫມໍ KSW, ໄດ້ຮັບເອົາໜ້າທີ່ ເປັນປະທານສະມາຄົມນີ້ ຕໍ່. ທ່ານ ດຣ. Stefan ເຄີຍໄດ້ໄປເຮັດວຽກຢູ່ໂຮງຫມໍແຂວງຊຽງຂວາງມາແລ້ວ ແລະ ກໍໄດ້ກະຕຸກຊຸກຍູ້ໂຄງການນີ້ມາດ້ວຍນໍ້າຈິດນໍ້າໃຈຢ່າງເອົາຈິງເອົາຈັງ, ເຊັ່ນດຽວກັບຄວາມເອົາໃຈໃສ່ຂອງລາວ ຕໍ່ການພັດທະນາການແພດຢູ່ໂຮງໝໍ KSW, ທີ່ໂດດເດັ່ນ. ໂດຽສະເພາະຢ່າງຍິ່ງ ໃນວິກິດການໂຄວິດ 19 ນີ້, ຄວາມເອົາໃຈໃສ່ຊ່ວຍເຫລືອອູ້ມຊູກັນຢ່າງຈິງຈັງດັ່ງກ່າວ ຍິ່ງເປັນເລື່ອງສໍາຄັນທີ່ສຸດສໍາລັບໂຮງໝໍທັງສອງແຫ່ງ, ຍິ່ງກວ່າໃນໄລຍະທີ່ຜ່ານມານັ້ນອີກ. ສະນັ້ນ, ໃນທັດສະນະຂອງຂ້າພະເຈົ້າ, ຖືວ່າ ເປັນກຽດອັນສູງສົ່ງ ທີ່ທີມບຸກຄະລາກອນຂອງໂຮງໝໍແຂວງຊຽງຂວາງ ໄດ້ໃຫ້ຄວາມຮ່ວມມືຊ່ວຍເຫຼືອ ໃນການຈັດພິມວາລະສານສະບັບພິເສດຂອງພະນັກງານໂຮງໝໍ KSW ຊຶ່ງມີນາມວ່າ: «37° (37 ອົງສາ)» ໃຫ້ປະກົດເປັນຈິງ ແລະ ຫວັງວ່າ ວາລະສານດັ່ງກ່າວ ຈະມີສ່ວນຮ່ວມຊ່ວຍໃຫ້ພວກເຮົາຍິ່ງໃກ້ຊິດສະຫນິດສະຫນົມກັນຂຶ້ນຍິ່ງກວ່ານີ້ຕື່ມອີກ.

ສ່ວນຕົວຂອງຂ້າພະເຈົ້າເອງແລ້ວ, ຖືວ່າ ໄດ້ຮຽນຮູ້ຫຼາຍຢ່າງທີ່ໜ້າຕື່ນເຕັ້ນເພີ້ມຂຶ້ນ, ໂດຍສະເພາະກ່ຽວກັບ ຄວາມແຕກຕ່າງແລະຄວາມຄ້າຍຄືກັນຫລາຍຢ່າງ ຂອງໂຮງໝໍສອງແຫ່ງ ທັ້ງໆທີ່ ໂຮງໝໍທັງສອງແຫ່ງນີ້ ຢູ່ຫ່າງໄກກັນຄົນລະຂອບຟ້າ.

ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍໄຊໃຫ້ພອນບັນດາທ່ານຜູ້ອ່ານ ໃຫ້ມີຄວາມເພີດເພີນກັບຂໍ້ມູນໃນວາລະສານສະບັບນີ້, ໂຊກດີ, ມີສຸຂພາບແຂງແຮງ, ແລະປະສົບຜົນສໍາເລັດໃນທຸກດ້ານ; ແລະ ຂໍອ່ວຍພອນໃຫ້ມິດຕະພາບລະຫວ່າງໂຮງໝໍທັງສອງແຫ່ງຂອງພວກເຮົານີ້ ຈົ່ງຫມັ້ນຍືນ! ●

**HANSJÖRG LEHMANN,**
ຫົວຫນ້າຄະນະອໍານວຍການ
CEO KANTONSSPITAL WINTERTHUR

ໂຮງຫມໍແຮກສ່ຽວ

## ພິມສະບັບຊຸດພິເສດສໍາລັບໂຄງການພິເສດ

ໂຮງໝໍແຕ່ລະແຫ່ງຈະມີໂລກສ່ວນຕົວຂອງໃຜມັນ ການຮ່ວມມືລະຫວ່າງໂຮງໝໍ KSW ແລະ ໂຮງໝໍແຂວງຊຽງຂວາງນີ້ ຈະດຶງໂລກສ່ວນຕົວສອງໂລກທີ່ແຕກຕ່າງກັນນີ້ ໃຫ້ຂະຫຍັບເຂົ້າຫາກັນໃຫ້ໃກ້ກັນກວ່າເດີມ. ດ້ວຍການພິມໜັງສືພິມສະບັບຊຸດນີ້ ພວກເຮົາຢາກຊີ້ແຈງໃຫ້ພວກເຈົ້າຮູ້ເຫັນກ່ຽວກັບຊີວິດການເປັນຢູ່ຂອງໂຮງໝໍອີກແຫ່ງທີ່ຕັ້ງຢູ່ອີກຂ້າງໜຶ່ງຂອງໂລກມະນຸດ



ຜູ້ອ່ານສົນໃຈຢາກເບິ່ງຮູບແລະເລື້ອງເລົ່າອື່ນໆອີກບໍ່? ກົດທີ່ນີ້ໄດ້ເລີຍ.
**ksw-laos.ch/special**

ພາຍໃນໂຮງໝໍໃດໜຶ່ງ ແຕ່ລະມື້ຈະມີເລື່ອງລາວຫຼາຍເລື່ອງເກີດຂຶ້ນ ບາງເລື່ອງຈະເຮັດໃຫ້ເຮົາຫົວເລາະໄດ້ ບາງເລື່ອງຈະດີຕໍ່ຈິດໃຈເຮົາ ແລ້ວອີກບາງເລື່ອງກໍ່ຈະເຮັດໃຫ້ເຮົາຮ້ອງໄຫ້ຮໍາໄຮ ໂດຍສະເພາະ ຄວາມແຕກຕ່າງດ້ານວັດທະນະທໍາຂອງສອງປະເທດ ສະວິດແລະລາວ ຈະເຮັດໃຫ້ເຮົາມີມູມມອງແບບໃໝ່ໃສ່ໃນເລື່ອງທີ່ເຮົາເຄີຍເຫັນມາກ່ອນແລ້ວ, ແຕ່ແລ້ວເຮົາກໍ່ຈະຕື່ນຕາຕື່ນໃຈໃນຄວາມຄ້າຍຄືກັນລະຫວ່າງສອງປະເທດອີກບໍ່ໜ້ອຍ. ດ້ວຍຄວາມປິ້ມໃຈກັບໂຄງການນີ້ ພວກເຮົາຄະນະບັນນາທິການຂອງໜັງສືພິມ 37° ຢາກຈະສ່ອງແສງໃຫ້ເຫັນກ່ຽວກັບການຮ່ວມມືລະຫວ່າງໂຮງໝໍນີ້ ແລະເຫັນໄດ້ຊັດເຈນເລີຍວ່າ ສາລະບານໜຶ່ງຫົວຂໍ້ບໍ່ສາມາດຈະບັນຍາຍຄວາມຫຼາກຫຼາຍດັ່ງກ່າວນັ້ນໄດ້. ດ້ວຍນີ້ ພວກຂ້າພະເຈົ້າຂໍຂອບໃຈ

ກັບທຸກຄົນທີ່ປະກອບສ່ວນໃຫ້ໜັງສືພິມສະບັບພິເສດນີ້ເກີດຜົນເປັນຈິງໄດ້: Jacques Gubler (ປະທານສະມາຄົມ), Kina SAYNAMKHA (ບັນນາທິການກ່ຽວກັບປະເທດລາວ), Johannes Inauen (ອອກແບບ), Sonja Rössler (ຈັດແຕ່ງ) und Pascal Schranz (ທີ່ປຶກສາ) ມາຈາກບໍລິສັດ Wirz, ໜ່ວຍນໍາພາຂອງໂຮງໝໍທັງສອງແຫ່ງແລະບັນດາພະນັກງານທີ່ໃຫ້ການຮ່ວມມືອອກບົດສໍາພາດ

# Die Spitäler in Zahlen
# ສະຖິຕິຂອງໂຮງໝໍທັງສອງແຫ່ງ

*Neben vielen Unterschieden gibt es auch eine Gemeinsamkeit: Beide Spitäler sind für 250’000 Menschen zuständig.* ຄຽງຄູ່ກັບຄວາມແຕກຕ່າງກັນໃນຫລາຍດ້ານ ໂຮງໝໍທັງສອງກໍ່ຍັງມີຄວາມຄ້າຍຄືກັນອັນໜຶ່ງ ນັ້ນກໍ່ຄື: ໂຮງໝໍທັງສອງແຫ່ງນີ້ ແຕ່ລະແຫ່ງມີໜ້າທີ່ຮັບຜິດຊອບຕໍ່ພົນລະເມືອງຈຳນວນ 250,000 ຄົນ ພາຍໃນເຂດຂອງຕົນ

- ● XKHPH | ໂຮງໝໍແຂວງຊຽງຂວາງ
- ● KSW | ໂຮງໝໍແຂວງວິນເຕີທົວ KSW

BETTEN | ຈຳນວນຕຽງນອນຄົນເຈັບ






STATIONÄRE PATIENTEN | ຈຳນວນຄົນເຈັບທີ່ນອນໂຮງໝໍ






MITARBEITENDE | ຈຳນວນພະນັກງານ






GEBURTEN | ຈຳນວນເດັກເກີດໃໝ່






*9000 km trennen Laos von der Schweiz. Das sieht man auch an den Lebenskosten.*
ປະເທດລາວຕັ້ງຢູ່ຫ່າງຈາກປະເທດສະວິດ 9000 ກມ. ຄວາມຫ່າງໄກອັນນີ້ກໍ່ສະແດງອອກໃນຄ່າໃຊ້ຈ່າຍຂອງຊີວິດປະຈຳວັນຢ່າງຊັດເຈນ

## Laos

Bevölkerung: 7.3 Mio. | ຈຳນວນພົນລະເມືອງ: 7,3 ລ້ານ ຄົນ
Einkommen pro Kopf: 7790 USD | ລາຍໄດ້ຕໍ່ຫົວຕໍ່ປີ : 7790 USD

- 1 kg Reis: ເຂົ້າ 1 ກິໂລ ລາຄາ: 0.7 USD
- 1 l Benzin: ນ້ຳມັນ 1 ລິດ ລາຄາ: 0.78 USD
- Blinddarmoperation: ການຜ່າຕັດໄສ້ຕິ່ງໜຶ່ງຄັ້ງລາຄາ: 117 USD
- Verlegung: ຄ່າໃຊ້ຈ່າຍເຂົ້ານອນໂຮງໝໍ: 380 USD

## Schweiz

Bevölkerung: 8.6 Mio. | ຈຳນວນພົນລະເມືອງ: 8,6 ລ້ານ ຄົນ
Einkommen pro Kopf: 73620 USD | ລາຍໄດ້ຕໍ່ຫົວຕໍ່ປີ : 73620 USD

- 1 kg Reis: ເຂົ້າ 1 ກິໂລ ລາຄາ: 4.7 USD
- 1 l Benzin: ນ້ຳມັນ 1 ລິດ ລາຄາ: 1.83 USD
- Blinddarmoperation: ການຜ່າຕັດໄສ້ຕິ່ງໜຶ່ງຄັ້ງລາຄາ: 7’500 USD
- Verlegung: ຄ່າໃຊ້ຈ່າຍເຂົ້ານອນໂຮງໝໍ: 1’300 USD

KSW Kantonsspital Winterthur

# 37°

**Winterthur** | *August 2022*

VEREIN

**Frischer Wind in der Spitalpartnerschaft**

**Seite 10**

ESSEN

**«Kin khao laeo boo? – Hast du schon gegessen?»**

**Seite 14**

INTENSIVPFLEGE

**Auf der Intensivstation zählt jede Sekunde**

**Seite 16**

EDITORIAL

## Auf eine weiterhin wunderbare Zusammenarbeit



Im Namen aller Mitarbeitenden des Provinzspitals Xiengkhouang (XKHPH) möchte ich Danke sagen für die fruchtbare Spitalpartnerschaft, die seit vielen Jahren vielen Menschen sehr viel ermöglicht hat. Die Zusammenarbeit bringt Wissensaustausch, Motivation und Energie, um uns stetig zu verbessern. Das Projekt verbindet, und so konnten wir uns auch u. a. dank der Erfahrung unserer Schweizer Partner bei der Bekämpfung von COVID-19 früh den Herausforderungen stellen. Mein besonderer Dank gilt Rolf Zehnder, der all das möglich gemacht hat. Ich wünsche ihm für seine neue Stelle alles, alles Gute!

Ich freue mich sehr, das Projekt mit dem neuen Vereinspräsidenten Stefan Breitenstein weiterführen zu dürfen. Diesen Herbst können wir endlich wieder mit unseren Freundinnen und Freunden vom KSW bei uns in Xiengkhouang zusammenarbeiten. Ich bin gespannt, was wir zusammen noch alles erreichen werden – an Ideen fehlt es auf jeden Fall nicht. ●

**DR. VILADET PRAPHASIRI,**
SPITALDIREKTOR PROVINZSPITAL XIENGKHOUANG

SPITALPARTNERSCHAFT

## Eine spezielle Ausgabe für ein spezielles Projekt

*Jedes Spital bildet einen eigenen Mikrokosmos. Die Spitalpartnerschaft zwischen dem Kantonsspital Winterthur (KSW) und dem Provinzspital Xiengkhouang (XKHPH) bringt diese beiden Welten einander etwas näher. In dieser Spezialausgabe möchten wir euch allen einen Einblick in das Spitalleben auf der jeweils anderen Seite der Welt geben.*



Lust auf mehr Bilder und Geschichten?
**ksw-laos.ch/geschichten**

In einem Spital ereignen sich jeden Tag unzählige Geschichten. Manche davon bringen uns zum Lachen, andere berühren unser Herz, und wieder andere können uns zum Weinen bringen. Gerade die kulturellen Unterschiede zwischen der Schweiz und Laos ermöglichen uns eine neue Sichtweise auf bereits Bekanntes, wir werden aber auch von Gemeinsamkeiten überrascht. Fasziniert vom Projekt, wollten wir als 37°-Redaktionsteam die Spitalpartnerschaft beleuchten und haben schnell gemerkt, dass ein Artikel bei weitem nicht reicht, um deren Vielfalt abzubilden. An dieser Stelle möchten wir allen herzlich danken, die diese Spezialausgabe ermöglicht haben: Jacques Gubler, Kina Saynamkha, Julie Stettbacher, Douangphansy Baumann-Soliphanh, beiden Spitalleitungen sowie Johannes Inauen, Sonja Rössler und Pascal Schranz von der Agentur Wirz für ihre Unterstützung, genau wie auch den vielen Mitarbeitenden, die sich für ein Interview zur Verfügung gestellt haben.

**Auflageສະບັບພິມ:** 5750 ຊຸດ, ປີທີ 480 ຂອງໜັງສືພິມສຳລັບພະນັກງານຂອງໂຮງໝໍ KSW, ປີທີ 5 ຂອງໜັງສືພິມ 37°, ຈັດພິມປີລະ 4 ຄັ້ງ. ພິມຄັ້ງຕໍ່ໄປເມື່ອ: ເດືອນກໍລະກົດ 2022

**Redaktion**
Meret Ann von Arx, Verantwortliche Interne Kommunikation; Marius Zingg, Kommunikations- und Social-Media-Manager

RECYCLED
Paper made from recycled material
FSC® C004807

OPERATIONSABTEILUNG | ພະແນກຜ່າຕັດ

# Gleiche Aufgabe – Andere Voraussetzungen
# ພາລະໜ້າທີ່ອັນດຽວກັນ ແຕ່ເງື່ອນໄຂແຕກຕ່າງກັນ

*Wenn der Blinddarm entzündet ist, bedeutet das sowohl in Laos als auch in der Schweiz eine innert Stunden zu behebende Notfallsituation. Trotz unterschiedlichen Voraussetzungen und Vorgehensweisen ist das Ziel dasselbe: das Wohl der Patientin resp. des Patienten zu sichern.* ຖ້າວ່າໄສ້ຕິ່ງເກີດມີການອັກເສບ, ບໍ່ວ່າຈະເກີດຂຶ້ນທີ່ປະເທດລາວຫຼືສະວິດເຊີແລນ ມັນກໍແມ່ນກໍລະນີສຸກເສີນທີ່ຕ້ອງໄດ້ຮັບການແກ້ໄຂປິ່ນປົວດ່ວນ. ເຖິງວ່າພວກເຮົາຈະມີເງື່ອນໄຂແລະວິທີການແຕກຕ່າງກັນກໍຕາມ ແຕ່ເປົ້າໝາຍກໍແມ່ນເປົ້າໝາຍອັນດຽວກັນ ນັ້ນກໍຄື ການປົກປ້ອງສຸຂະພາບຂອງຄົນເຈັບໃຫ້ປອດໄພ.

**OPERATIONSRÄUME** | ຫ້ອງຜ່າຕັດ



XKHPH ໂຮງໝໍແຂວງຊຽງຂວາງ | 3

●●●

KSW ໂຮງໝໍແຂວງວິນເຕີທົວ KSW | 22

●●●●●●●●●●●●●●●●●●●●●●



*Bei einer Appendektomie benötigt man eine ruhige Hand.* ເວລາຜ່າຕັດໄສ້ຕິ່ງທ່ານໝໍຕ້ອງມີມືທີ່ໝຸ່ນທ່ຽງ

**Phonsavan**

Eine Blinddarmentzündung zu diagnostizieren, kann schwierig sein. Der behandelnde Arzt, Dr. Khamdone Philavong, muss sich dabei auf seine klinische Erfahrung und den nicht immer verlässlichen Ultraschallbefund stützen, denn ein CT zur Absicherung gibt es in Phonsavan nicht. Der Operationssaal für Eingriffe im Bauchraum ist zudem gerade besetzt, darum muss heute der Saal benutzt werden, in dem normalerweise gynäkologische Operationen vorgenommen werden. Das sechsköpfige Operationsteam steht bereit, alle Mitglieder kennen sich schon lange und arbeiten beinahe jeden Tag miteinander. «Wir sind ein Team», merkt Dr. Khamdone an, «nur dank ihnen kann ich darauf vertrauen, dass die Operation perfekt durchgeführt wird.» Das Operationsbesteck besteht zum grössten Teil aus vom KSW ausgemusterten und zur Verfügung gestellten Teilen und weist etliche Gebrauchsspuren auf. Nichtsdestotrotz macht sich der Operateur unter dem Licht der einzigen Halogenlampe daran, den Blinddarm in einer offenen Operation zu entfernen. «Ein Chirurg in Laos führt die gleiche Operation oft genau so sauber durch wie einer in der Schweiz – aber mit viel weniger Hilfsmitteln. Das erfordert höchstes Können», meint Carole Mäder, Fachfrau Operationstechnik am KSW mit Einsatzerfahrung. Nach der Operation reinigt die OP-Pflegefachfrau das benutzte Operationsbesteck zuerst gründlich, bevor sie es zum Sterilisationsgerät bringt, um es für die nächste Operation aufzubereiten.

**ປະເທດລາວ**

ການບົ່ງມະຕິກ່ຽວກັບໄສ້ຕິ່ງອັກເສບ ອາດເປັນເລື່ອງທີ່ຫຍຸ້ງຍາກໄດ້. ໃນການບົ່ງຕິດັ່ງກ່າວທ່ານໝໍຜູ້ປິ່ນປົວ ດຣ ຄໍາດອນ ພິລາວົງ ຈໍາຕ້ອງໃຊ້ປະສົບການດ້ານຄລີນິກແລະຜົນກວດອັນຕຣາຊາວທີ່ບໍ່ແນ່ນອນສະເໝີໄປນັ້ນ ເປັນການຢືນຢັນ, ເພາະວ່າລະບົບ CT ບໍ່ມີທີ່ປະເທດລາວທີ່ຈະຮັບຮອງການບົ່ງມະຕິໄດ້. ນອກນັ້ນ ຫ້ອງຜ່າຕັດສໍາລັບຜ່າຕັດເຂດບໍລິເວນທ້ອງກໍ່ບໍ່ວ່າງ ສະນັ້ນ ມື້ນີ້ຈິ່ງຕ້ອງເອົາຫ້ອງຜ່າຕັດສໍາລັບພະຍາດຜູ້ຍິງມາໃຊ້ເປັນຫ້ອງຜ່າຕັດແທນ. ໜ່ວຍງານຜ່າຕັດຫົກຄົນກຽມພ້ອມແລ້ວ, ແຕ່ລະຄົນຮູ້ຈັກກັນດີມາກ່ອນແລ້ວ ແລະເຮັດວຽກຮ່ວມກັນມາເກືອບທຸກໆວັນ. «ພວກເຮົາເປັນທີມງານດຽວກັນ» ດຣ ຄໍາດອນ ກ່າວ «ກໍ່ພຽງແຕ່ຍ້ອນພວກເຂົານີ້ລະ ຂ້ອຍຈິ່ງໝັ້ນໃຈວ່າ  ການຜ່າຕັດນີ້ຈະມີຜົນສໍາເລັດແນ່ນອນ». ອຸປະກອນຜ່າຕັດສ່ວນໃຫຍ່ຈະເປັນອຸປະກອນທີ່ KSW ບໍ່ໃຊ້ແລ້ວແລະຄັດເລືອກອອກ ແລ້ວເອົາມາໃຫ້ໃຊ້, ສະນັ້ນ ອຸປະກອນນັ້ນຈິ່ງມີຮ່ອງຮອຍໃຊ້ງານມາຫຼາຍແລ້ວ. ຢ່າງໃດກໍ່ຕາມ ທ່ານໝໍຜ່າຕັດກໍ່ລົງມືຜ່າຕັດເອົາໄສ້ຕິ່ງອອກ ໂດຍມີໂຄມໄຟເຮໂລເຢນອັນດຽວເຍືອງແສງສະຫວ່າງໃຫ້. «ໃນກໍລະນີດຽວກັນໝໍຜ່າຕັດຢູ່ລາວກໍ່ສາມາດຜ່າຕັດໃຫ້ສະອາດໄດ້ເທົ່າກັບທ່ານໝໍຢູ່ສະວິດ - ແຕ່ວ່າ ໝໍຢູ່ລາວຈະໃຊ້ອຸປະກອນຊ່ວຍເຫລືອໜ້ອຍກວ່າຫຼາຍ. ສະນັ້ນການປະຕິບັດງານຈະຕ້ອງການຄວາມສາມາດສຸດໆເລີຍ», ນາງ Carole Mäder ໄດ້ກ່າວໄວ້ຕາມປະສົບການຂອງຕົນ ໃນນາມຜູ້ຊ່ຽວຊານດ້ານເຕັກນິກການຜ່າຕັດປະຈໍາ KSW. ຫຼັງຈາກຜ່າຕັດຮຽບຮ້ອຍແລ້ວ ນາງພະຍາບານປະຈໍາຫ້ອງຜ່າຕັດກໍ່ອະນາໄມເຄື່ອງມືຜ່າຕັດຢ່າງລະອຽດ ແລ້ວຈິ່ງເອົາໄປໃສ່ເຄື່ອງຂ້າເຊື້ອ ເພື່ອກຽມໃສ່ການຜ່າຕັດຄັ້ງຕໍ່ໄປ.




*In diesem Gerät werden alle Instrumente am XKHPH sterilisiert.* ເຄື່ອງມືທຸກຢ່າງຂອງໂຮງໝໍແຂວງຊຽງຂວາງຈະນໍາເອົາມາຂ້າເຊື້ອຍດ້ວຍເຄື່ອງຈັກນີ້



*Das gereinigte Operationsbesteck wird beschriftet.*
ເຄື່ອງມືຜ່າຕັດທີ່ສະອາດແລ້ວຈະເອົາມາຂຽນລະບຸໄວ້



*Über den Bildschirm sehen die Ärztinnen und Ärzte in den Körper des Patienten.*
ທ່ານໝໍສາມາດສ່ອງເຫັນພາຍໃນຮ່າງກາຍຂອງຄົນເຈັບໂດຍຜ່ານໜ້າຈໍ

**Winterthur**

Zur Diagnose einer Blinddarmentzündung ist die klinische Untersuchung sehr wichtig. Zudem können auch Blutwerte, Ultraschall und wenn nötig ein CT die Diagnose sichern. Ins voll durchgetaktete reguläre Operationsprogramm, das von 7.00 bis 16.00 Uhr durchgehend läuft, passt eine Blinddarmoperation leider meist nicht rein. Dafür gibt es am KSW einen OP-Saal, der immer für Notfälle aller Art freigehalten wird. In diesem Saal sammeln sich nun alle Beteiligten zum sogenannten Time-out. Hier hält man noch ein letztes Mal vor der Operation inne und überprüft alle patientenrelevanten Daten auf ihre Richtigkeit. Zudem stellen sich alle mit Namen und Funktion vor, denn Teamarbeit ist in jedem Operationssaal absolute Voraussetzung. «Auch in der relativen Anonymität von über 300 ein- und ausgehenden Personen, die im OP-Bereich arbeiten, muss die Teamarbeit gewährleistet sein. Am KSW müssen wir dazu mehr Anstrengungen unternehmen. In Laos ist es einfach gegeben, dass man sich kennt», sagt Thomas Rieder, Leiter Pflege Anästhesie. Patientinnen und Patienten mit einer Blinddarmentzündung werden am KSW standardmässig laparoskopisch, d. h. über drei kleine Hautschnitte, und unter Vollnarkose behandelt. Das ist angenehmer für die Patientinnen und Patienten und erfordert im Allgemeinen nur einen kurzen Spitalaufenthalt. Nach der ca. einstündigen Operation werden die benutzten Materialien entweder entsorgt, wenn es sich um Einwegartikel handelt, oder in der KSW-eigenen Zentralsterilisation wiederaufbereitet.

**ເມືອງວິນເຕີທົວ**

ໃນການບົ່ງມະຕິກ່ຽວກັບໄສ້ຕິ່ງອັກເສບ ການກວດພາຍນອກເປັນເລື່ອງສຳຄັນຫຼາຍ. ຈາກນັ້ນແລ້ວກໍ່ຍັງຈະມີຜົນກວດເລືອດ ຜົນກວດອັນຕຣາຊາວ ແລະຖ້າຈຳເປັນກໍ່ຕ້ອງມີຜົນກວດ CT ມາໃຊ້ເປັນທີ່ຢືນຢັນການບົ່ງມະຕິ. ການຜ່າຕັດໄສ້ຕິ່ງສ່ວນຫຼາຍແລ້ວຈຶ່ງຈະບໍ່ເໝາະໃນລາຍການຜ່າຕັດທົ່ວໄປທີ່ຈະຈັດລຽນຕິດກັນເຕັມໄປເລີຍ ແຕ່ 7 ໂມງ ເຖິງ 16 ໂມງແຕ່ລະມື້. ສະນັ້ນ ທີ່ KSW ຈຶ່ງມີຫ້ອງຜ່າຕັດພິເສດຫ້ອງໜຶ່ງທີ່ຈອງໄວ້ສຳລັບບັນດາກໍລະນີສຸກເສີນທຸກແບບ. ຢູ່ຫ້ອງນີ້ບັນດາຜູ້ຮ່ວມງານທຸກຄົນຈະມາພົບກັນໃນເວລາທີ່ຮຽກກັນວ່າ Time-out. ຈະມາກຽມພ້ອມຢູ່ຫ້ອງນີ້ຄັ້ງສຸດທ້າຍກ່ອນດຳເນີນການຜ່າຕັດ ແລະຈະກວດສອບເບິ່ງຂໍ້ມູນຄົນເຈັບເພື່ອຄວາມຖືກຕ້ອງ. ຈາກນັ້ນ ທີມງານທຸກຄົນຈະແນະນຳຕົວເອງໃຫ້ທີມງານຮູ້ດ້ວຍຊື່ແລະໜ້າທີ່, ເພາະວ່າການເຮັດວຽກເປັນທີມແມ່ນເງື່ອນໄຂຕົ້ນຕໍໃນທຸກໆຫ້ອງຜ່າຕັດ. «ພາຍໃຕ້ຄວາມເປັນສ່ວນຕົວຂອງຄົນທີ່ຫລາຍກວ່າ 300 ຄົນທີ່ທຽວອອກເຂົ້າເຮັດວຽກໃນບໍລິເວນເຂດຜ່າຕັດກໍ່ດີ ການເຮັດວຽກເປັນທີມກໍ່ຕ້ອງມີໃຫ້ໄດ້. ຢູ່ KSW ເຮົາຕ້ອງບຸກບືນຫຼາຍ ກ່ອນຈະເປັນທີມໄດ້. ຢູ່ລາວຈະເປັນເລື່ອງງ່າຍ ເພາະທຸກຄົນກໍ່ຮູ້ຈັກກັນຢູ່ແລ້ວ» Thomas Rieder ກ່າວ ໃນນາມຫົວໜ້າພະຍາບານຝ່າຍວາງຢາສະຫຼົບ. ຢູ່ KSW ຄົນເຈັບທີ່ມີໄສ້ຕິ່ງອັກເສບຈະປິ່ນປົວແບບຜ່ານກ້ອງສ່ອງ, ໝາຍຄວາມວ່າ ຈະມີການຜ່າຕັດໂດຍຜ່ານຮູເຈາະຜ່ານຜິວໜັງສາມຮູນ້ອຍໆແລະໃຊ້ຢາສະຫຼົບທົ່ວໄປ. ສຳລັບຄົນເຈັບແລ້ວ ຮູບການນີ້ເປັນຮູບການທີ່ສະບາຍກວ່າ ແລະທຳມະດາແລ້ວກໍຈະນອນໂຮງໝໍພຽງແຕ່ເວລາສັ້ນໆ. ການຜ່າຕັດຈະໃຊ້ເວລາປະມານໜຶ່ງຊົ່ວໂມງ ຈາກນັ້ນອຸປະກອນທີ່ໃຊ້ໄດ້ຄັ້ງດຽວກໍ່ຈະເອົາໄປຖິ້ມ ແລະຖ້າເປັນອຸປະກອນທີ່ໃຊ້ຕໍ່ໄດ້ ກໍ່ຈະຖືກນຳເອົາໄປຂ້າເຊື້ອທີ່ສູນຂ້າເຊື້ອຂອງ KSW ເພື່ອກະກຽມໄວ້ເພື່ອຜ່າຕັດອີກຄັ້ງຕໍ່ໄປ



*Alle Instrumente werden gereinigt und geprüft.* ເຄື່ອງມືທຸກອັນຈະຕ້ອງໄດ້ອະນາໄມແລະກວດສອບ



*Durch ein kleines Loch wird die Kamera eingeführt.*
ກ້ອງສ່ອງຈະເອົາເຂົ້າໄປດ້ານໃນໂດຍຜ່ານຮູນ້ອຍໆ

WÄSCHEREI | ການຊັກເຄື່ ອງ

# «Alle waschen ihre Uniformen selber.» ພະນັກງານທຸກຄົນຈະຊັກຊຸດນຸ່ງເຮັດວຽກດ້ວຍຕົນເອງ



*In der Zentralwäscherei (ZWZ) ist fast alles automatisiert. Neben dem KSW werden auch andere Spitäler mit frischer Wäsche beliefert.*
ທີ່ສູນຊັກແຫ້ງ (ZWZ) ລະບົບທຳງານທຸກຢ່າງຈະດຳເນີນງານແບບອັດຕະໂນມັດ. ນອກຈາກໂຮງໝໍ KSW ແລ້ວ ກໍ່ຍັງມີໂຮງໝໍແຫ່ງອື່ນໆມາໃຊ້ບໍລິການສູນຊັກແຫ້ງນີ້

**Winterthur**
Um für mehrere tausend Mitarbeitende täglich frische Kleidung bereitzustellen, braucht es viel Platz. Das Waschen der täglich über 3000 kg Wäsche übernimmt darum zum grössten Teil die Zentralwäscherei Zürich (ZWZ), die modernste Wäscherei Europas, die auch zahlreiche andere Spitäler bedient. Hier werden die Taschen vor der Wäsche sogar schon von Robotern nach Gegenständen durchsucht. Diese Dienstleistung hat ihren Preis, doch laut Angelika Züst, Leiterin Hauswirtschaft am KSW, lohnt sich die Investition. «Den benötigten Platz könnten wir gar nicht bereitstellen, und die durchgehend hohe Qualität spart Zeit und schont unsere Nerven.» Zu tun gibt es aber auch so genug. Die ganze Wäsche muss erst eingesammelt und später wieder verteilt werden, und kleine Löcher flickt man immer noch von Hand.

**ເມືອງວິນເຕີ ທົວ**
ເພື່ອຈະເຮັດໃຫ້ພະນັກງານຫຼາຍພັນຄົນໄດ້ໃສ່ເຄື່ອງນຸ່ງສະອາດ ເຮົາຕ້ອງການສະຖານທີ່ອັນກວ້າງຂວາງ ສະນັ້ນສ່ວນໃຫຍ່ຂອງເຄື່ອງນຸ່ງປະມານ 3000 ກກ ຂອງແຕ່ລະມື້ ແມ່ນມອບໃຫ້ສູນຊັກແຫ້ງເມືອງຊູຣິກ (ZWZ) ຮັບໄປຊັກ ອັນເປັນບໍລິສັດຊັກແຫ້ງທີ່ທັນສະໄໝທີ່ສຸດພາຍໃນທະວີບເອີຣົບ ບໍລິສັດນີ້ຍັງໃຫ້ບໍລິການກັບໂຮງໝໍແຫ່ງອື່ນໆອີກ. ຢູ່ທີ່ນີ້ຈະໃຊ້ຫຸ່ນຍົນຄົ້ນຫາສິ່ງທີ່ຕົກຄ້າງຢູ່ໃນຖົງເຄື່ອງນຸ່ງທຸກຄັ້ງກ່ອນຈະດຳເນີນການຊັກເຄື່ອງ ການໃຫ້ບໍລິການນີ້ກໍ່ມີລາຄາຂອງມັນ ແຕ່ຕາມຄຳເຫັນຂອງນາງ Angelika Züst ຫົວໜ້າພະແນກບໍລິຫານຂອງໂຮງໝໍ KSW ການລົງທຶນດັ່ງກ່າວກໍ່ຄຸ້ມຄ່າຈິງ. «ເຮົາບໍ່ສາມາດຈະສະໜອງຄວາມຕ້ອງການສະຖານທີ່ອັນຈຳເປັນນັ້ນໄດ້ ແລະຄຸນນະພາບທີ່ດີຈະປະຢັດເວລາແລະຈະຜ່ອນຜັນປະສາດຂອງເຮົາ». ວຽກອື່ນກໍ່ມີຫຼາຍພໍແລ້ວ ເຄື່ອງນຸ່ງເປື້ອນທັງໝົດຕ້ອງໄດ້ເກັບມາສະສົມ

«Manchmal übersehe ich Dinge wie Büroklammern, die immer wieder in den Taschen vergessen werden. Das kann zum Abbruch eines Waschgangs führen und schadet der Maschine.» Frau Yer, Wäscherin

«ບາງຄັ້ງ ຂ້ອຍກໍ່ບໍ່ເຫັນສິ່ງຂອງທີ່ບັນດາທ່ານໝໍລືມເອົາອອກຈາກຖົງເສື້ອ ເຊັ່ນເຂັມຄັດເອກະສານ ສິ່ງນີ້ຈະໄປເຮັດໃຫ້ຈັກຊັກເຄື່ອງຢຸດເດີນແລະເພພັງໄດ້»
Frau Yer, ນາງເຢີ ພະນັກງານຊັກເຄື່ ອງ ກ່າວ



*Nach dem Trocknen ist die OP-Wäsche wieder einsatzbereit.*
ຫລັງຈາກຕາກແຫ້ງແລ້ວ ຊຸດຫ້ອງຜ່າຕັດກໍ່ກຽມພ້ອມໃຊ້ງານ



*Noam Thiry sammelt mit dem Schlepper schmutzige Wäsche ein.*
ໂນອາມ ເທີຣີ (Noam Thiry) ຂັບລໍ້ແກ່ເຄື່ອງ ເລາະເກັບເອົາເຄື່ອງນຸ່ງທີ່ໃຊ້ແລ້ວມາໂຮມກັນໄວ້



*Die Wäscherei befindet sich gleich neben dem Spital.*
ໂຮງຊັກແຫ້ງກໍ່ຢູ່ໃກ້ໆຂ້າງໂຮງໝໍ



*In der automatischen Wäscheausgabe am KSW gibt es jeden Morgen frische Berufskleider.*
ບ່ອນແຈກເຄື່ອງນຸ່ງແບບອັດຕະໂນມັດຂອງໂຮງໝໍ KSW ຈະສະໜອງໃຫ້ທຸກຄົນມີຊຸດນຸ່ງເຮັດວຽກສະອາດໃນທຸກເຊົ້າເລີຍ

«Alle Mitarbeitenden erhalten eine Uniform pro Jahr, die sie selber waschen. Für die Freiwilligen reicht es leider meistens nicht mehr. Darum sind wir immer sehr dankbar für die Schweizer Uniformen.»

Frau Khamsaward, Mitglied Pflegeleitung

«ພະນັກງານຄົນໜຶ່ງຈະໄດ້ຊຸດເຮັດວຽກໜຶ່ງຊຸດຕໍ່ປີ ແລະຕ້ອງໄດ້ຊັກເອົາເອງ ສໍາລັບພະນັກງານອາສາຈະບໍ່ມີຊຸດເຮັດວຽກໃຫ້ ສະນັ້ນພວກເຮົາຈິ່ງຂໍຂອບໃຈຫຼາຍໆທີ່ໄດ້ຊຸດເຮັດວຽກຈາກປະເທດສະວິດ»

Frau Khamsaward, ນາງ ຄໍາສະຫວາດ, ສະມາຊິກຂອງໜ່ວຍນໍາພະແນກພະຍາບານ, ກ່າວ

«Alle Mitarbeitenden erhalten jeden Tag frische Berufskleidung. Die Ausgabe ist komplett automatisiert. Nach der Arbeit geben sie die Kleider zurück.»

Dominique Sieber, Verantwortliche QM und Projekte Hauswirtschaft

«ພະນັກງານທຸກຄົນຈະໄດ້ຊຸດເຮັດວຽກສະອາດທຸກມື້ ການແຈກເຄື່ອງນຸ່ງຈະດໍາເນີນງານແບບອັດຕະໂນມັດ ຫຼັງຈາກເລີກວຽກແລ້ວ ທຸກຄົນຈະສົ່ງເຄື່ອງນຸ່ງນັ້ນຄືນ»

Dominique Sieber, ກ່າວ, ຜູ້ ຮັບຜິດຊອບກ່ຽວກັບການຈັດການຄຸນນະພາບແລະໂຄງການ ໜ່ວຍບໍລິຫານ



*Frau Yer liebt ihren Wäschewagen: «Er ist mein Freund. Ich brauche ihn häufiger als mein Motorrad.»*
ນາງ ເຢີ ມັກລໍ້ຍູ້ເຄື່ອງຂອງລາວ: «ລໍ້ນີ້ເປັນໝູ່ຂອງຂ້ອຍ. ຂ້ອຍຕ້ອງໃຊ້ລໍ້ນີ້ຫລາຍກວ່າລົດຈັກຂອງຂ້ອຍອີກຊໍ້າ.»

**Phonsavan**
Im Provinzspital Xiengkhouang waschen die Mitarbeitenden ihre Uniformen selber – eine effiziente und günstige Lösung, die laut Frau Khamsaward aus der Pflegeleitung ganz gut funktioniert. Dennoch waschen die beiden externen Mitarbeiterinnen Frau Yer (23) und Frau Payeng (64) in der spitaleigenen Waschküche täglich um die 60 kg Wäsche, vor allem aus dem Operationssaal und dem Geburtssaal, wo Hygiene besonders wichtig ist. Mit zwölf Stunden ab fünf Uhr früh ist ein Arbeitstag für das Duo bereits ohne Überstunden lang und anstrengend. Trotzdem fühlen sich die beiden im Spital «wie zu Hause». Wenn die viel genutzten und in die Jahre gekommenen, 2011 vom Lions Club Winterthur gesponserten Maschinen aus der Schweiz nur nicht so oft aussteigen würden.

ໄວ້ແລະຖ້າສະອາດແລ້ວກໍ່ຕ້ອງນໍາໄປແຈກຢາຍໃຫ້ພະນັກງານອີກ, ຮອຍຂາດເລັກນ້ອຍກໍ່ຍັງຕ້ອງໄດ້ຍິບແສ່ວດ້ວຍມືອີກພ້ອມ.

**ເມືອງໂພນສະຫວັນ**
ຢູ່ໂຮງໝໍແຂວງຊຽງຂວາງ ພະນັກງານທຸກຄົນຈະຊັກຊຸດເຮັດວຽກເອົາເອງ – ເປັນການແກ້ໄຂທີ່ປະຢັດດີແລະມີປະສິດທິພາບ ຕາມຄໍາເຫັນຂອງນາງຄໍາສະຫວາດ ໜຶ່ງໃນການນໍາພະແນກພະຍາບານ. ແຕ່ແລ້ວ ກໍ່ຍັງມີພະນັກງານນອກອີກສອງຄົນ ນາງເຢີ (23 ປີ) ແລະນາງເພຍເຢີງ (64 ປີ) ທີ່ຮັບຜິດຊອບຊັກເຄື່ອງໃນໂຮງຊັກເຄື່ອງຂອງໂຮງໝໍ ຊັກເຄື່ອງປະມານ 60 ກກ ຕໍ່ມື້ ສ່ວນຫຼາຍຈະເປັນເຄື່ອງຂອງຫ້ອງຜ່າຕັດອັນທີ່ຕ້ອງການຄວາມສະອາດເປັນພິເສດ ທັງສອງຄົນເຮັດວຽກມື້ໜຶ່ງ 12 ຊົ່ວໂມງໂດຍບໍ່ຄິດໄລ່ເວລາເພີ່ມ ຖືວ່າເປັນວັນງານທີ່ໜັກໜ່ວງແລະຍາວນານ ແຕ່ທັງສອງກໍ່ຍັງຮູ້ສຶກວ່າ ໂຮງໝໍນັ້ນແມ່ນ»ເຮືອນຢູ່»ຂອງພວກເຂົາ, ເສຍດາຍທີ່ຈັກຊັກເຄື່ອງມີບັນຫາເລື້ອຍໆ, ຈັກຊັກເຄື່ອງທີ່ໄດ້ຈາກສະໂມສອນ Lions Club Winterthur ຈາກປະເທດສະວິດເມື່ອປີ 2011.

SPITALNEUBAU | ອາຄານຫຼັງໃໝ່ຂອງໂຮງໝໍ

# ໂຮງໝໍສອງແຫ່ງກຳລັງກະກຽມຕົນເອງໃຫ້ພ້ອມເພື່ອອະນາຄົດ
# Zwei Spitäler machen sich bereit für die Zukunft

ໂຮງໝໍທັງສອງແຫ່ງ ມີຄວາມຮັບຜິດຊອບສູງຕໍ່ກັບປະຊາກອນ ແລະພັດທະນາຕົວເອງໄປເລື້ອຍໆ. ເພື່ອຕອບສະໜອງການດູແລສຸຂະພາບຂອງປະຊາຊົນໃນທ້ອງຖິ່ນຂອງຕົນໃຫ້ຮັບປະກັນໄດ້ ໃນອະນາຄົດ, ໂຮງໝໍທັງສອງແຫ່ງຈຶ່ງສຸມໃສ່ການສ້າງອາຄານຫຼັງໃໝ່ຂຶ້ນ. ບັນດາອາຄານໃໝ່ນີ້ ນອກຈາກຈະມີລັກສະນະຄວາມຄ້າຍຄຽງຮ່ວມກັນຫຼາຍຢ່າງແລ້ວ ແຕ່ກໍຍັງມີຄວາມແຕກຕ່າງຈາກກັນນໍາ. *Beide Spitäler tragen eine grosse Verantwortung für die Bevölkerung und entwickeln sich ständig weiter. Um auch in Zukunft eine gute Gesundheitsversorgung in ihrer Region gewährleisten zu können, setzen beide Spitäler auf einen Neubau. Diese Neubauten haben viele Gemeinsamkeiten, es gibt aber auch Unterschiede.*

**ເມືອງໂພນສະຫວັນ**

ອາຄານຫຼັງໃໝ່ນີ້ສະແດງເຖິງຄວາມຄືບໜ້າອັນກ້າວໄກສຳລັບແຂວງຊຽງຂວາງ ການພັດທະນາດ້ານເຕັກນິກ ເຊັ່ນ ເຄື່ອງວິໃຈແບບອັດຕະໂນມັດຈະເຮັດໃຫ້ການບົ່ງມະຕິແບບໃໝ່ເກີດຂຶ້ນໄດ້ - ຈະປະຢັດເວລາອັນມີຄ່າຫຼາຍຂຶ້ນແລະຈະໄດ້ຮັບຜົນກວດທີ່ແມ່ນອນກວ່າ ແຕ່ວ່າມັນກໍ່ຈະຮຽກຮ້ອງເຖິງການລົງທຶນຫຼາຍຂຶ້ນເຊັ່ນກັນ. ເນື່ອງຈາກໂລກໂຄວິດ-19 ກໍ່ຈຳຕ້ອງໄດ້ຍົກເລີກແຜນການຝຶກອົບຮົມຊຸດທຳອິດທີ່ປະເທດຫວຽດນາມເສຍກ່ອນ. ແຕ່ນາງ ຄຳຟອງ ວິໄລຈັນ ຜູ້ທີ່ນຳພາໃນການຍົກຍ້າຍຫ້ອງວິໃຈ ກໍ່ບໍ່ໄດ້ເປັນຫ່ວງຕໍ່ກັບບັນຫາດັ່ງກ່າວ. «ສະຖານະພາບບ່ອນເຮັດວຽກໃໝ່ອາດຈະຊັບຊ້ອນກໍ່ຕາມ ແຕ່ບໍ່ມີບັນຫາ - ພວກເຮົາສາມາດປັບຕົວແລະຮຽນຮູ້ໄດ້ ແລະອັນທີ່ເຮົາບໍ່ຈຳເປັນຕ້ອງສົ່ງເລືອດໄປກວດຢູ່ນະຄອນຫຼວງນັ້ນ ມັນກໍ່ເປັນຈຸດດີຍິ່ງໃຫຍ່ຢູ່ແລ້ວ». ດຣ ກົງແສງ ໄຕຣແກ້ວພິທູນ ຫົວໜ້າພະແນກຢາສະຫຼົບ ພະແນກສຸກເສີນແລະການແພດມໍລະສຸມ ກໍ່ດີໃຈເຊັ່ນກັນກັບອາຄານຕຶກໃໝ່ນີ້. «ເຮົາມີຫ້ອງທີ່ກວ້າງ ມີລິຟ ແລະຕຶກທັງໝົດນີ້ໄດ້ຮັບການອອກແບບທີ່ຮອບຄອບໂດຍສະເພາະ ສຳລັບຕຽງຄົນເຈັບແຕ່ລະຕຽງເຮົາຈະມີໜ້າຈໍສະເພາະຂອງໃຜຂອງມັນ». ປັດຈຸບັນ ທ່ານໝໍດັ່ງກ່າວແລະທີມງານກຳລັງວາງແຜນວ່າຈະຍົກຍ້າຍຄົນເຈັບຈາກພະແນກມໍລະສຸມທີ່ໃຊ້ຢູ່ດຽວນີ້ ໄປຍັງພະແນກມໍລະສຸມຢູ່ຕຶກຫຼັງໃໝ່ນັ້ນໄດ້ແນວໃດ. «ຖ້າຄົນເຈັບຫາກອ່ອນເພຍເກີນທີ່ຈະຍົກຍ້າຍໄດ້ ເຮົາກໍ່ຕ້ອງປິ່ນປົວດູແລພວກເຂົາຕໍ່ໄປ ຈົນກວ່າວ່າພວກເຂົາຈະແຂງແຮງຂຶ້ນ».

**Phonsavan**

Der Neubau bedeutet für das Provinzspital Xiengkhouang einen grossen Schritt nach vorn. Technische Neuerungen wie automatisierte Laboranalysegeräte bringen neue Diagnosemöglichkeiten – das spart wertvolle Zeit und ermöglicht genauere Ergebnisse, bedeutet aber auch viel Aufwand. Erste Schulungen in Vietnam mussten wegen der COVID-19-Krise vorerst aufgeschoben werden. Frau Khamfong Vilaichan, die den Umzug des Labors leitet, macht sich deswegen aber keine grossen Sorgen. «Die neue Arbeitsumgebung ist komplex, aber das ist kein grosses Problem – wir können uns anpassen und lernen. Dass wir das Blut zum Testen nicht mehr in die Hauptstadt schicken müssen, ist jedenfalls ein grosser Vorteil.» Auch Dr. Kongsaeng Traikeophithoune, Leiter Anästhesie, Notfall- und Intensivmedizin, freut sich auf den Neubau. «Wir haben grössere Räume, Lifte, und der gesamte Bau ist sehr durchdacht. Und vor allem haben wir endlich für fast jedes Patientenbett einen eigenen Monitor.» Bereits jetzt planen er und sein Team, wie die Patientinnen und Patienten von der bisherigen Intensivstation in jene im Neubau ziehen können. «Wenn sie zu schwach sind für den Weg, werden wir sie im alten Gebäude weiterpflegen, bis es ihnen besser geht.»

**Winterthur**

Nach rund zehn Jahren Planungs- und Bauzeit steht er: der KSW-Neubau. Über 2000 Menschen arbeiteten auf der Baustelle, um das komplexe Gebäude fertigzustellen. Die vielen Einzelzimmer sind aber nicht nur Luxus, sondern erleichtern auch die Betreuung. Bis zur Eröffnung war es aber kein leichter Weg. Bereits Monate vor der Inbetriebnahme machten sich die Chirurgin-



*Das neue Hauptgebäude des Provinzspitals Xiengkhouang ist fast fertig.* ອາຄານໃຫຍ່ຫລັງໃໝ່ຂອງໂຮງໝໍແຂວງຊຽງຂວາງກໍ່ໃກ້ຈະສຳເລັດແລ້ວ



*Der Neubau ist bereits in Betrieb. Nur der Park muss noch bepflanzt werden.*
ອາຄານຫລັງໃໝ່ກໍ່ໃຊ້ໄດ້ເປັນທາງການແລ້ວ ເຫຼືອພຽງແຕ່ພາກສ່ວນສວນຍັງຕ້ອງປູກເຄື່ອງປູກໃສ່



*Für Privatpatientinnen und -patienten hat das XKHPH ein eigenes Gebäude.*
ໂຮງໝໍແຂວງຊຽງຂວາງຈະມີອາຄານຫລັງໜຶ່ງຕ່າງຫາກເພື່ອບໍລິການຮັບໃຊ້ຄົນເຈັບພາກເອກະຊົນ

nen und Chirurgen mit dem neuartigen und komplizierten Hybrid-OP vertraut. «In den neuen Operationssälen, die mit modernster Technologie ausgestattet sind, lassen sich auch immer mehr komplizierte Operationen minimalinvasiv und damit schonender vornehmen», freut sich Prof. Dr. med. Stefan Breitenstein. Das wiederum entlastet die Mitarbeitenden in der Pflege, die sich um die stationär aufgenommenen Patientinnen und Patienten kümmern. Diese hat man einzeln nacheinander ins neue Gebäude gebracht – ganze vier Tage dauerte das. Dafür musste der Spitalbetrieb nicht unterbrochen werden.



*Die Bauarbeiterinnen und Bauarbeiter in Laos müssen schwindelfrei sein.* ພະນັກງານກໍ່ສ້າງຢູ່ລາວຕ້ອງເປັນຄົນທີ່ບໍ່ຢ້ານຄວາມສູງ



*Mit einem grossen Kran geht die Arbeit einfacher von der Hand.* ລົດເຄຣນຈະຊ່ວຍໃຫ້ວຽກໜັກເປັນວຽກເບົາໄດ້

**ເມືອງວິນເຕີທົວ**

ເກືອບສິບປີທີ່ມີການວາງແຜນແລະກໍ່ສ້າງ ໃນທີ່ສຸດອາຄານຫຼັງໃໝ່ຂອງໂຮງໝໍ KSW ກໍ່ຕັ້ງຂຶ້ນມາ. ແຮງງານຫຼາຍກວ່າ 2000 ຄົນໄດ້ປະກອບວຽກກັບແຫ່ງກໍ່ສ້າງນີ້ ເພື່ອສ້າງອາຄານອັນຊັບຊ້ອນໃຫ້ສຳເລັດ. ຫ້ອງດ່ຽວຫຼາຍຫ້ອງບໍ່ເປັນພຽງແຕ່ຫ້ອງຫຼູຫຼາເທົ່ານັ້ນ ແຕ່ຍັງໃຫ້ຄວາມສະດວກໃນການດູແລຄົນເຈັບອີກດ້ວຍ. ກ່ອນຈະມາເຖິງມື້ເປີດໃຊ້ບໍລິການ ກໍ່ບໍ່ແມ່ນວ່າຈະເປັນເລື່ອງງ່າຍ ຫຼາຍເດືອນກ່ອນເປີດໃຊ້ເປັນທາງການ ບັນດາທ່ານໝໍຜ່າຕັດຍິງຊາຍໄດ້ຝຶກຊ້ອມທຳຄວາມລຶ້ງເຄີຍກັບການຜ່າຕັດແບບປະສົມລຸ້ນໃໝ່ທີ່ຍາກສັບສົນ. «ຫ້ອງຜ່າຕັດລຸ້ນໃໝ່ທີ່ປະກອບດ້ວຍເທັກໂນໂລຢີທີ່ທັນສະໄໝສຸດ ກໍ່ຈະເຮັດໃຫ້ການຜ່າຕັດທີ່ຊັບຊ້ອນດຳເນີນການໄດ້ໂດຍທີ່ບໍ່ຮຸນແຮງແລະຜ່ອນເບົາຕໍ່ຄົນເຈັບ» ສາດສະດາຈານ ດຣ Stefan Breitenstein ກ່າວດ້ວຍຄວາມດີໃຈ. ດ້ວຍການຜ່າຕັດແບບນີ້ ຈະເປັນການຜ່ອນເບົາໃຫ້ແກ່ພະນັກງານພະຍາບານ ຜູ້ທີ່ຕ້ອງດູແລຄົນເຈັບທີ່ຕ້ອງຮັບເຂົ້ານອນໂຮງໝໍ ບັນດາຄົນເຈັບນີ້ໄດ້ຍົກຍ້າຍໄປອາຄານຫຼັງໃໝ່ເທື່ອລະຄົນ - ເປັນເວລາສີ່ວັນ ການຍົກຍ້າຍຈິ່ງສຳເລັດ. ໃນເວລາຍົກຍ້າຍນີ້ການປິ່ນປົວແລະດູແລກໍ່ບໍ່ໄດ້ຈຳເປັນຕ້ອງຢຸດພັກແຕ່ຢ່າງໃດ.



*Hier entsteht die neue Intensivstation im XKHPH.*
ທີ່ນີ້ຈະມີແຜນສ້າງພະແນກມໍລະສຸມອັນໃໝ່ໃຫ້ແກ່ໂຮງໝໍແຂວງຊຽງຂວາງ

DER VEREIN | ສະມາຄົມ

# Frischer Wind in der Spitalpartnerschaft
# ບັນຍາກາດໃໝ່ ໃບໜ້າໃຫມ່ ໃນສະມາຄົມໂຮງໝໍແຮກສ່ຽວ

*Im Verein Spitalpartnerschaft Phonsavan (Laos) – KSW ist viel passiert. Nach über zehn Jahren im Amt übergibt Rolf Zehnder das Präsidium nun an Prof. Dr. med. Stefan Breitenstein, der auch Mitglied der Geschäftsleitung am KSW ist.*
ມີສິ່ງໃໝ່ຫຼາຍຢ່າງເກີດຂຶ້ນພາຍໃນສະມາຄົມການຮ່ວມມືດ້ານໂຮງໝໍ ເມືອງໂພນສະຫວັນ-KSW ພາຍຫຼັງທີ່ຕົນເອງໄດ້ຮັບໜ້າທີ່ເປັນປະທານເປັນເວລາຫຼາຍກວ່າສິບປີ ທ່ານ Rolf Zehnder ໄດ້ມອບຕໍາແໜ່ງປະທານໃຫ້ແກ່ ທ່ານ ສາດສະດາຈານ ດຣ Stefan Breitenstein ຜູ້ທີ່ຍັງເປັນໜຶ່ງໃນໜ່ວຍນໍາຂອງໂຮງໝໍ KSW ອີກດ້ວຍ

Mit nicht viel mehr als der Idee des damaligen KSW-Spitaldirektors Rolf Zehnder für eine Spitalpartnerschaft im Gepäck landete Jacques Gubler 2010 auf einem kleinen Flugplatz in Laos. Schon auf dem Flugfeld wurde er von einem Empfangskomitee, angeführt von Gesundheitsminister und Spitaldirektor, mit Blumen willkommen geheissen. Er war von der Gastfreundschaft überwältigt und vom Land sowie von der Offenheit der Leute fasziniert, und so dauerte es nicht lange, bis eine Zusammenarbeit der beiden Spitäler beschlossene Sache war.

## Kein Hilfswerk

Grundlage für diese fruchtbare Zusammenarbeit war von Anfang an der gegenseitige Respekt. «Wir sind kein Hilfswerk», fasst Jacques Gubler, Vizepräsident des Vereins, zusammen. «Wir bringen Wissen mit nach Laos und nehmen genauso welches mit zurück nach Hause.» Dank dieser Haltung konnte sich die Spitalpartnerschaft auf der Basis gegenseitigen Vertrauens entwickeln, und alle Beteiligten lernen voneinander das, was sie an ihrem Gegenüber am meisten beeindruckt. Für Jacques Gubler waren das unter anderem die laotische Gelassenheit und die Akzeptanz des Unveränderbaren. Umgekehrt hat sich im Provinzspital Xiengkhouang das Jahresziel «be on time» etabliert, das von den am Morgenrapport Teilnehmenden eine sehr unlaotische konsequente Pünktlichkeit verlangt – ein (unerwarteter) Einfluss der Schweizer Partner.

Der Verein verbindet aber nicht nur Menschen über die Landesgrenzen hinweg, sondern auch die Mitarbeitenden am KSW. So hört man hin und wieder die laotische Begrüssung «Sabaidii» in den Gängen, und wenn es im Personalrestaurant während der jährlichen «Laos-Woche» kulinarische Spezialitäten von der anderen Seite der Welt gibt, ist das am KSW für viele ein Highlight.

## Bald geht es wieder los

Während der letzten zwei Jahre konnten wegen der COVID-19-Krise keine Einsätze vor Ort geleistet werden. In dieser Zeit unterstützte der Verein das Partnerspital nach Kräften mit Schutzmaterial, Kleidung und Stipendien für die Weiterbildung von Fachkräften in Laos und Vietnam. Auch fanden regelmässig Videokonferenzen zum Thema Pandemiebewältigung statt.

Aber nun geht es endlich weiter: Anfang September reisen drei Vorstandsmitglieder nach Laos, um zusammen mit der Spitalleitung die Einsätze für die kommenden Jahre zu planen. Dabei werden Ziele gesetzt und die wichtigsten Projekte festgelegt, auf die man sich fokussieren möchte. Bereits im Oktober brechen dann die ersten Gruppen von Vereinsmitgliedern auf. Für manche ist es die erste Reise nach Laos. Dr. med. Leonie-Sophia Pösch kann es kaum erwarten: «Die Spitalpartnerschaft finde ich ein faszinierendes Projekt. Ich freue mich darauf, Einblicke in eine völlig andere Kultur zu erhalten, und warte nun gespannt auf meinen ersten Einsatz!»

ໃນປີ 2010, ທ່ານ Jacques Gubler ໄດ້ເດີນທາງມາລົງເດີ່ນບິນນ້ອຍໆແຫ່ງໜຶ່ງຂອງປະເທດ ສປປລາວ ກັບກະເປົາເດີນທາງຫນ່ວຍໜຶ່ງທີ່ບໍ່ມີເຄື່ອງຫຍັງຫລາຍ ນອກຈາກຄວາມຄິດຄວາມຫວັງຂອງທ່ານ Rolf Zehnder, ອະດີດຜູ້ອໍານວຍການໂຮງຫມໍ KSW, ທີ່ຢາກສ້າງຕັ້ງໂຄງການໂຮງຫມໍແຮກສ່ຽວ ເທົ່ານັ້ນ. ຢູ່ເດີ່ນບິນແຫ່ງນີ້ ທ່ານ Jacques Gubler ໄດ້ຖືກຕ້ອນຮັບຈາກທ່ານຫົວຫນ້າພະແນກສາທາລະນະສຸກ ແລະ ອໍານວຍການໂຮງໝໍແຂວງຊຽງຂວາງ ພ້ອມຊໍ່ດອກໄມ້ທີ່ສວຍງາມ. ທ່ານ Jacques Gubler ຮູ້ສຶກປິ້ມໃຈ ແລະປະທັບໃຈທີ່ສຸດ ຕໍ່ກັບການຕ້ອນຮັບທີ່ອົບອຸ່ນແລະ ຄວາມເປັນກັນເອງຈາກເຈົ້າພາບທ້ອງຖິ່ນນີ້. ແລະ ຫລັງຈາກນັ້ນ ຕໍ່ມາ ເປັນເວລາບໍ່ດົນນານປານໃດ, ໂຮງຫມໍທັງສອງແຫ່ງນີ້ ກໍໄດ້ຕົກລົງລິເລີ້ມຮ່ວມມືກັນເປັນທາງການ.

## ບໍ່ແມ່ນອົງການຊ່ວຍເຫຼືອ

ພື້ນຖານທີ່ເຮັດໃຫ້ການຮ່ວມມືໄດ້ຮັບໝາກຮັບຜົນແບບນີ້ ກໍຄື ການນັບຖືເຊິ່ງກັນແລະກັນ ມາແຕ່ເບື້ອງຕົ້ນ. ທ່ານ Jacques Gubler, ຮອງປະທານສະມາຄົມ ເຄີຍກ່າວຮວບຮວມໄວ້ວ່າ "ພວກເຮົາບໍ່ແມ່ນອົງການຊ່ວຍເຫຼືອ", "ພວກເຮົານໍາເອົາຄວາມຮູ້ ແລະ ປະສົບການຈາກນີ້ໄປໃຫ້ ສປປ ລາວ ແລະກໍໄດ້ນໍາເອົາຄວາມຮູ້ອັນອື່ນຈາກ ສປປ ລາວ ກັບຄືນມາບ້ານເຮົານໍາ ຄືກັນ".
ເນື່ອງຈາກທ່າທີ່ແບບນີ້ ຄູ່ຮ່ວມມືໂຮງຫມໍແຮກສ່ຽວທັງສອງຝ່າຍ ຈິ່ງສາມາດພັດທະນາຕົວເອງຂຶ້ນ ບົນພື້ນຖານຄວາມເຊື່ອຫມັ້ນຊຶ່ງກັນແລະກັນ ແລະທັງສອງຝ່າຍໄດ້ມີໂອກາດຮຽນຮູ້ຈາກຝ່າຍກົງກັນຂ້າມ ໃນສິ່ງທີ່ອີກຝ່າຍເຮັດໄດ້ດີກວ່າ, ເຊັ່ນວ່າ: ທ່ານ Jacques Gubler ຈະປະທັບໃຈ ໃນຄວາມໃຈເຢັນຂອງຄົນລາວ ແລະ ການຍອມຮັບໃນສິ່ງທີ່ປ່ຽນແປງບໍ່ໄດ້. ແລະກົງກັນຂ້າມ, ໂຮງໝໍແຂວງຊຽງຂວາງ, ໄດ້ກໍານົດເປົ້າໝາຍແຫ່ງປີ ໄວ້ວ່າ: "be on time (ມາກົງ/ ຖືກເວລາ)" ເປັນເປົ້າໝາຍຈັດຕັ້ງປະຕິບັດແຫ່ງປີ, ຊຶ່ງພະນັກງານຜູ້ທີ່ເຂົ້າຮ່ວມລາຍງານແຕ່ລະເຊົ້າ ຕ້ອງມາກົງເວລາ, ຊຶ່ງອັນນີ້ ບໍ່ແມ່ນນິໃສຂອງຄົນລາວເລີຍ. ອັນນີ້ຖືວ່າ ແມ່ນການເຊື່ອມຊຶມແບບຢ່າງຂອງຄວາມກົງຕໍ່ເວລາ ຈາກຄູ່ຮ່ວມມືຝ່າຍສະວິດ ມາໃສ່ຝ່າຍລາວ (ໂດຍທີ່ຝ່າຍສະວິດ ບໍ່ໄດ້ຄາດຫວັງໄວ້).

ສະມາຄົມນີ້ ບໍ່ພຽງແຕ່ເຊື່ອມຕໍ່ບຸກຄົນລະຫວ່າງພົມແດນສອງປະເທດນີ້ເທົ່ານັ້ນ ແຕ່ ຍັງມີຜົນຕໍ່ສາຍສໍາພັນລະຫວ່າງພະນັກງານພາຍໃນໂຮງໝໍ KSW ນໍາອີກດ້ວຍ, ຕົວຢ່າງ: ບາງຄັ້ງຄາວເຮົາຈະໄດ້ຍິນສຽງທັກທາຍກັນເອງຂອງພະນັກງານທີ່ຍ່າງສວນທາງກັນຢູ່ໃນໂຮງໝໍວິນເຕີທູຣ, ເປັນພາສາລາວວ່າ «ສະບາຍດີ» ແລະ ຍິ່ງໄປກວ່ານັ້ນ, ອາທິດທີ່ແມ່ນ «ສັບປະດາອາຫານລາວ», ທີ່ຫ້ອງອາຫານປະຈໍາໂຮງໝໍ KSW ໄດ້ຈັດຂຶ້ນທຸກໆປີ, ຊຶ່ງຈະມີການເສີບອາຫານທີ່ປຸງແຕ່ງຕາມສູດອາຫານທ້ອງຖິ່ນຂອງລາວ ທີ່ຢູ່ມູມອື່ນຂອງໂລກ



*Teamerfolg Kaiserschnitt.* ເກີດລູກດ້ວຍການຜ່າຕັດ ຜົນສໍາເລັດຂອງທີມງານ



*Einsatz in Laos: Die Reisekosten tragen die Vereinsmitglieder selbst.*
ລົງວຽກທີ່ປະເທດລາວ: ສະມາຊິກທຸກຄົນຂອງສະມາຄົມ ຈະຮັບຜິດຊອບຄ່າໃຊ້ຈ່າຍໃນການເດີນທາງດ້ວຍຕົນເອງ

| | |
|---|---|
| Vereinsgründung: | 2011 |
| Vereinsmitglieder: | 147 |
| Einsätze: | 190 |
| Einsatzleistende: | 92 Personen |
| Einsatzwochen in Laos: | 576 |
| Geliefertes Material: | 11 Container |



*Der Verein versorgt das Personal auf der COVID-Station mit neuen Berufskleidern.*
ສະມາຄົມໄດ້ຫາເຄື່ອງນຸ່ງເຮັດວຽກໃໝ່ໆ ມາໃຫ້ແກ່ພະນັກງານປະຈໍາພະແນກ COVID



*Erfahrung weitergeben: gemeinsame Visite im XKHPH.* ຖ່າຍທອດປະສົບການ: ໄປກວດຄົນເຈັບຮ່ວມກັນທີ່ໂຮງໝໍແຂວງຊຽງຂວາງ

ນັ້ນ, ອາທິດນີ້, ສຳລັບພະນັກງານສ່ວນໃຫຍ່ຂອງໂຮງຫມໍ KSW ແລ້ວ ຈະແມ່ນອາທິດທີ່ເດັ່ນ, ອາທິດທີ່ຄຶກຄື້ນທີ່ສຸດ.

**ອີກບໍ່ດົນ ຫຼາຍກິດຈະກຳ ຈະໄດ້ດຳເນີນຕໍ່ໄປອີກແລ້ວ**
ໃນໄລຍະສອງປີຜ່ານມາ, ຍ້ອນວິກິດການໂຄວິດ-19 ພວກເຮົາບໍ່ສາມາດໄປເຄື່ອນໄຫວຢູ່ຊຽງຂວາງເລີຍ. ແຕ່ໃນຊ່ວງເວລາດັ່ງກ່າວ, ສະມາຄົມ ຫຼື ໂຮງໝໍ KSW ໄດ້ພະຍາຍາມຊ່ວຍເຫຼືອໂຮງໝໍແຂວງຊຽງຂວາງ ຊຶ່ງເປັນຄູ່ຮ່ວມມືດ້ວຍຫຼາຍຮູບແບບ, ຕາມຄວາມສາມາດ ເຊັ່ນ: ການບໍລິຈາກ ເຄື່ອງປ້ອງກັນ, ເຄື່ອງນຸ່ງ ແລະ ທຶນການສຶກສາໃຫ້ພະນັກງານວິຊາການ ທີ່ໄປຮຽນຕໍ່ພາຍໃນປະເທດ ແລະຢູ່ປະເທດຫວຽດນາມ. ນອກຈາກນີ້ ຍັງໄດ້ຈັດກອງປະຊຸມທາງໄກຜ່ານວິດີໂອ ກ່ຽວກັບການຄວບຄຸມພະຍາດລະບາດ, ຢ່າງເປັນປະຈຳ.

ຄາດວ່າ ໃນຕົ້ນເດືອນກັນຍາ ປີ 2022 ນີ້, ຄະນະປະທານສະມາຄົມ 3 ທ່ານ ຈະເດີນທາງໄປ ສປປ ລາວ ເພື່ອໄປວາງແຜນການເຄື່ອນໄຫວຂອງປີຕໍ່ໆໄປ ຮ່ວມກັນກັບຄະນະນຳຂອງໂຮງຫມໍແຂວງຊຽງຂວາງ. ໃນນັ້ນ ແມ່ນ ຈະຕັ້ງເປົ້າໝາຍແລະລະບຸບັນດາໜ້າວຽກໂຄງການທີ່ສຳຄັນ ທີ່ເປັນໜ້າວຽກທີ່ພວກເຮົາຢາກຕັ້ງໃຈສຸມໃສ່. ໃນເດືອນຕຸລາ ຈະມີສະມາຊິກຂອງທີມງານກຸ່ມທຳອິດຂອງສະມາຄົມເດີນທາງມາ ສປປ ລາວ; ສຳລັບບາງຄົນໃນກຸ່ມນີ້ ຈະແມ່ນການເດີນທາງມາລາວຄັ້ງທຳອິດ. ດຣ Leonie-Sophia Pösch ເກືອບລໍຖ້າບໍ່ໄດ້ແລ້ວ ແລະ ກ່າວວ່າ: «ການຮ່ວມມືຂອງສອງໂຮງໝໍແຮກສ່ຽວນີ້ເປັນໂຄງການທີ່ປະທັບໃຈຫລາຍ. ຂ້ອຍດີໃຈຫຼາຍທີ່ຈະໄດ້ໄປຮຽນຮູ້ກ່ຽວກັບວັດທະນະທຳອື່ນທີ່ແຕກຕ່າງແທ້ໆ ແລະ ຂ້ອຍລໍຖ້າການລົງພາກສະໜາມຄັ້ງທຳອິດຂອງຂ້ອຍ ຢູ່ ສປປ ລາວ ດ້ວຍຄວາມຕື່ນເຕັ້ນທີ່ສຸດ!»

**Interview mit Prof. Dr. med. Stefan Breitenstein, neuer Vereinspräsident und CMO am KSW**



*37°: Rolf Zehnder war über zehn Jahre Präsident des Vereins. Wie fühlt es sich an, das Präsidium zu übernehmen?*
*Stefan Breitenstein:* Es ist eine grosse Ehre, dieses Mandat zu übernehmen. Rolf hat es geschafft, einen Verein zu gründen, der von der Leidenschaft seiner Mitglieder lebt. Sie hat auch mich angesteckt, und bis heute habe ich es nur selten erlebt, dass Menschen mit so viel Herzblut bei der Sache sind. Ich freue mich ausgesprochen, das Projekt weiterführen zu dürfen, und bedanke mich ganz herzlich bei Rolf und allen Vereinsmitgliedern für ihre Arbeit!

*Wie wird sich die Tätigkeit des Vereins entwickeln?*
Der Verein ist auf einem guten Weg. Was genau als Nächstes passieren wird, kann ich nicht sagen, weil ich es nicht entscheide. Das passiert zusammen mit unseren geschätzten Kolleginnen und Kollegen in Laos. Wir alle streben weiterhin eine nachhaltige Entwicklung der Partnerschaft an, die den fachlichen Austausch, aber auch die Freude auf beiden Seiten fördert. Es ist mir ein persönliches Anliegen, dass sich weiterhin Menschen engagieren, die für die Sache brennen und mehr als einen Einblick erhalten wollen. Sicher ist aber schon jetzt: Sobald es möglich sein wird, werden wieder Einsätze vor Ort stattfinden. Darauf freuen sich hier am KSW viele, mich eingeschlossen.

**ບົດສຳພາດ ທ່ານ ສຈ.ດຣ. Stefan Breitenstein, ປະທານຄົນໃຫມ່ຂອງສະມາຄົມໂຮງຫມໍແຮກສ່ຽວ ແລະຫົວຫນ້າວິຊາການໂຮງຫມໍ KSW**

37°: Rolf Zehnder ໄດ້ເປັນປະທານສະມາຄົມຫລາຍກວ່າ 10 ປີ ມາແລ້ວ, ເຈົ້າຮູ້ສຶກແນວໃດທີ່ໄດ້ຮັບເອົາຫນ້າທີ່ນີ້ຕໍ່ຈາກລາວ?
Stefan Breitenstein: ຂ້ອຍຮູ້ສຶກມີກຽດເປັນຢ່າງຍິ່ງທີ່ໄດ້ຮັບເອົາຫນ້າທີ່ນີ້ຕໍ່ຈາກລາວ. Rolf ສາມາດປະສົບຜົນສຳເລັດໃນການສ້າງຕັ້ງສະມາຄົມ, ຊຶ່ງໄດ້ດຳເນີນກິດຈະກຳມາຈົນເຖິງມື້ນີ້ ຍ້ອນຄວາມກະຕືລືລົ້ນຂອງສະມາຊິກສະມາຄົມທຸກຄົນ. ຄວາມກະຕືລືລົ້ນອັນນີ້ ກໍໄດ້ມາ "ຕິດແປດ" ໃສ່ຂ້ອຍຄືກັນ. ແລະຈົນມາເຖິງມື້ນີ້ ຂ້ອຍກໍຍັງບໍ່ຄ່ອຍໄດ້ພົບເຫັນຄົນທີ່ເອົາໃຈໃສ່ເຮັດວຽກອັນໃດນຫນຶ່ງຢ່າງເອົາຈິງເອົາຈັງ ດ້ວຍນ້ຳຈິດນ້ຳໃຈແທ້ໆ ແບບນີ້ຈັກເທື່ອ. ຂ້ອຍດີໃຈທີ່ສຸດ ທີ່ໄດ້ຮັບອະນຸຍາດໃຫ້ສືບຕໍ່ນຳພາໂຄງການ ແລະຂໍຂອບໃຈຢ່າງຍິ່ງນຳ Rolf ແລະສະມາຊິກສະມາຄົມທຸກໆຄົນ ທີ່ໄດ້ເຮັດຫນ້າທີ່ຂອງຕົນເອງມາຕະຫລອດ.
37°: ການເຄື່ອນໄຫວຂອງສະມາຄົມຈະພັດທະນາສືບຕໍ່ໄປແນວໃດ?
Stefan Breitenstein: ສະມາຄົມພວກເຮົາໄດ້ດຳເນີນວຽກງານມາໄດ້ດີ. ຂ້ອຍບໍ່ສາມາດເວົ້າໄດ້ວ່າ ໃນອະນາຄົດຕໍ່ໄປ ມັນຈະເປັນໄປໃນຮູບການໃດ ເພາະຂ້ອຍບໍ່ແມ່ນຄົນຕັດສິນ. ແລະອະນາຄົດກໍຍັງຂຶ້ນກັບເພື່ອນມິດຄູ່ຮ່ວມມືຄົນລາວທີ່ນັບຖືຂອງພວກເຮົາ, ທີ່ຢູ່ປະເທດລາວນຳ. ພວກເຮົາທຸກຄົນຈະພະຍາຍາມສືບຕໍ່ພັດທະນາວຽກງານໂຄງການໂຮງຫມໍແຮກສ່ຽວຂອງພວກເຮົາໃຫ້ກ້າວເດີນຕໍ່ໄປເລື້ອຍໆ, ດ້ວຍການແລກປ່ຽນບົດຮຽນທາງພາກວິຊາການແຕ່ຢູ່ບົນພື້ນຖານຄວາມເພິ່ງພໍໃຈຂອງສອງຝ່າຍນຳ. ສຳລັບຄວາມມຸ້ງຫວັງສ່ວນຕົວຂອງຂ້ອຍແມ່ນ ຂ້ອຍຢາກໃຫ້ມີກຸ່ມຄົນທີ່ຫ້າວຫັນ ເປັນຫົວແຮງຊ່ວຍໂຄງການຢ່າງປັກອົກປັກໃຈ, ຫລາຍກວ່າ ຈຳນວນບຸກຄົນທີ່ພຽງແຕ່ຢາກໄປທົດລອງຈອບເບິ່ງເທົ່ານັ້ນ.
ດຽວນີ້ສິ່ງທີ່ແນ່ນອນທີ່ສຸດ ກໍແມ່ນວ່າ: ຖ້າມື້ໃດທີ່ໂອກາດອຳນວຍ, ພວກເຮົາກໍຈະໄປດຳເນີນກິດຈະກຳຢູ່ໂຮງຫມໍແຮກສ່ຽວຂອງພວກເຮົາອີກ, ໄວເທົ່າທີ່ຈະໄວໄດ້. ເພາະສະນັ້ນ, ພະນັກງານໂຮງຫມໍ KSW ຈຶ່ງພາກັນດີໃຈໄວ້ຖ້າແລ້ວ, ຮວມທັງຂ້ອຍເອງນຳ.

NÄCHSTER STAMMTISCH / INFORMATIONSVERANSTALTUNG:

**Mittwoch, 28. September 2022, KSW, U14–16.**

| | |
|---|---|
| ການສ້າງຕັ້ງສະມາຄົມ: | 2011 |
| ສະມາຊິກສະມາຄົມ: | 147 |
| ກິດຈະກຳ: | 190 |
| ພະນັກງານທີ່ ໄດ້ຮ່ວມກິດຈະກຳ: | 92 ຄົນ |
| ອາທິດກິດຈະກຳ ຢູ່ ລາວ: | 576 ອາທິດ |
| ວັດສະດຸ ທີ່ ໄດ້ສົ່ງມາລາວ: | 11 ຄອນເທັນເນີ |



*Auch die laotische Kultur lernt man gemeinsam kennen.*
ແລະວັດທະນະທຳລາວກໍ່ຮຽນຮູ້ນຳກັນໄປ ເຊັ່ນກັນ



*Bei der allerersten Landung in Xiengkhouang wird die KSW-Delegation von einem hochrangigen Empfangskomitee begrüsst.*
ໃນການຢ້ຽມຢາມຄັ້ງທຳອິດ ບັນດາຜູ້ແທນຂອງໂຮງໝໍ KSW ໄດ້ຮັບການຮັບຕ້ອນຈາກຄະນະທີ່ມີບົດບາດສຳຄັນ





UMGEBUNG | ຕຳແໜ່ງ

# Zwei Sehenswürdigkeiten, die einen Besuch wert sind!

## ສະຖານທີ່ທ່ອງທ່ຽວທີ່ມີຄຸນຄ່າ 2 ແຫ່ງ ທີ່ຕ້ອງໄດ້ໄປຢ້ຽມຢາມ

*«Xiengkhouang und Winterthur haben mehr zu bieten als Spitäler. Das UNESCO-Welterbe «Plain of Jars» und die «Kyburg» bieten Gelegenheit, in die Geschichte der zwei Regionen einzutauchen und etwas zu erleben.»*

ນອກຈາກມີໂຮງໝໍແຂວງແລ້ວ, ແຂວງຊຽງຂວາງ ແລະ Winterthur ຍັງມີສະຖານທີ່ຕ່າງໆທີ່ຜູ້ມາຢ້ຽມຢາມຄວນໄດ້ໄປເຫັນ. «ທົ່ງໄຫຫີນ» ແລະ «Kyburg (ຄີບູ ຣກ)» ຊຶ່ງເປັນແຫລ່ງທ່ອງທ່ຽວມໍລະດົກໂລກ ຂອງອົງການ UNESCO, ເປັນສະຖານທີ່ ທີ່ໃຫ້ໂອກາດແກ່ພວກເຮົາສາມາດຮຽນຮູ້ປະຫວັດສາກຂອງສອງທ້ອງຖິ່ນ ແລະສາມາດນຳຄວາມຕື່ນເຕັ້ນໃຫ້ກັບເຮົາໄດ້ອີກ

Bild: HMQ AG und URL gebaeudeaufnahme.ch

## ເມືອງໂພນສະຫວັນ

ພູພຽງຊຽງຂວາງ ກໍ່ຍັງຖືກຮຽກອີກວ່າ «ທົ່ງໄຫດິນ» ອັນເປັນ ສັບແປເປັນພາສາເຢຍລະມັນທີ່ບໍ່ເໝາະສົມກັບໄຫຕົວຈິງທີ່ເຮັດ ດ້ວຍຫີນແກຣນິດທີ່ໜ້າແໜ້ນແລະບາງໜ່ວຍກໍ່ໃຫຍ່ສູງເຖິງສາມ ແມັດ. ສິ່ງສັນຍາລັກດັ່ງກ່າວນີ້ຖືກສ້າງຂຶ້ນໃນສະໄໝໂລຫະ ກ່ອນ ໜ້ານີ້ຫຼາຍກວ່າ 2500 ປີ ເປັນຊ່ວງເວລາທີ່ທະວີບເອີຣົບກຳລັງ ມີເມືອງກຸງໂຣມເກີດຂຶ້ນ. ບັນດາ «ໄຫ» ທີ່ຈັດວາງໄວ້ເປັນກຸ່ມນັ້ນ ແມ່ນສິ່ງທີ່ປະທັບຈັບໃຈອັນສຳຄັນສຳລັບນັກທ່ອງທ່ຽວ ແລະໄດ້ ຖືກຮອງຮັບໃຫ້ເປັນສ່ວນໜຶ່ງຂອງມໍລະດົກໂລກເມື່ອປີກ່ອນໆມາ ນີ້ ບັນດານັກໂບຮານຄະດີສັນນິຖານວ່າ ບັນດາໄຫຫີນນີ້ແມ່ນແຫຼ່ງ ຝັງສົບຂອງຄົນບູຮານ - ແຕ່ວ່າຄົນທ້ອງຖິ່ນຍັງມີນິທານພື້ນເມືອງ ທີ່ກ່າວເຖິງຄວາມເປັນມາຂອງໄຫຫີນນີ້ອີກ. ເຊັ່ນວ່າ ຄາວນັ້ນ ຫຼັງຈາກຊະນະສູ້ຮົບແລ້ວ ພະຍາຂຸນເຈືອງໄດ້ສັ່ງໃຫ້ໄພ່ເມືອງສ້າງໄຫ ເພື່ອເຮັດເຫຼົ້າໄຫເພື່ອສະຫຼອງໄຊຊະນະໃນຄັ້ງນັ້ນ. ອີກນິທານໜຶ່ງຍັງ ກ່າວເຖິງທີ່ກຳເນີດຂອງໄຫນີ້ໃນສະໄໝຂອງຄົນແປດສອກ, ເຊັ່ນວ່າ ໄຫຫີນນີ້ແມ່ນຈອກທີ່ຄົນແປດສອກໃຊ້ໃນການດື່ມເຄື່ອງດື່ມຂອງ ເຂົາ. ສະຖານທີ່ນີ້ມີຄວາມໝາຍສຳຄັນຫຼາຍສຳລັບແຂວງຊຽງຂວາງ ເພາະເປັນສັນຍາລັກຂອງວັດທະນະທຳທ້ອງຖິ່ນນີ້ ແລະຍັງເປັນແຫຼ່ງ ທ່ອງທ່ຽວຍອດນິຍົມຂອງມວນຊົນໃນເຂດນີ້ - ຄົນສ່ວນໃຫຍ່ໄດ້ ມາທ່ຽວສະຖານທີ່ນີ້ແລ້ວ. ເນື່ອງຈາກວ່າ ທີ່ນີ້ຕ້ອງເສຍຄ່າເຂົ້າຊົມ ສະຖານທີ່ນີ້ຈຶ່ງບໍ່ເໝາະສົມໃນການທ່ຽວຫຼິ້ນຂອງໄວໜຸ່ມບ່າວສາວ ແຕ່ເປັນແຫຼ່ງທີ່ໃຫ້ວິວສວຍງາມສຳລັບພາບຖ່າຍງານດອງຫຼືຖ່າຍທຳ ວີດີໂອເພງ. ແລ້ວອີກຢ່າງ ສະຖານທີ່ດັ່ງກ່າວແມ່ນແຫຼ່ງທ່ອງທ່ຽວທີ່ ສະມາຊິກສະມາຄົມຈາກປະເທດສະວິດຕ້ອງໄດ້ໄປເຫັນ!

## Phonsavan

Das Hochplateau von Xiengkhouang wird auch als «Ebene der Tonkrüge» bezeichnet – eine ungenaue deutsche Übersetzung, die den bis zu drei Meter hohen gefässähnlichen Strukturen aus massivem Granit kaum gerecht wird. Die Wahrzeichen stammen aus der Eisenzeit vor über 2500 Jahren, als in Europa die Stadt Rom gegründet wurde. Die in Gruppen aufgestellten «Krüge» sind eine wichtige Touristenattraktion und seit einigen Jahren Teil des UNESCO-Weltkulturerbes. Archäologen vermuten, dass die Steinkrüge zu Grabstätten gehören – es kursieren aber auch volkstümliche Erklärungen für ihre Entstehung. So soll der König Khoun Jeuang nach gewonnener Schlacht die Herstellung der Krüge zur Lagerung von Reiswein befohlen haben, um den Sieg gebührend zu feiern. Eine andere Legende datiert die Entstehung der Krüge auf die Zeit der Riesen/Giganten. Diese hätten die Krüge als Trinkgefässe benutzt. Die Stätten sind für die Provinz Xiengkhouang ein wichtiger Teil der kulturellen Identität und ein beliebtes Ausflugsziel für die Menschen aus der Region – die meisten waren schon mehrmals hier. Weil für den Besuch Eintritt verlangt wird, sind die Stätten zwar kein idealer Ort für romantische Spaziergänge von Jugendlichen, jedoch ein beliebter Hintergrund für Hochzeitsfotos oder Musikvideos. Und für die Vereinsmitglieder aus der Schweiz ist ein Besuch der gigantischen Krüge ein Muss!



*Die «Plain of Jars» ist auch für die Vereinsmitglieder ein beliebtes Ausflugsziel.*
«ທົ່ງໄຫຫີນ» ກໍ່ເປັນໜຶ່ງໃນແຫລ່ງທ່ອງທ່ຽວຍອດນິຍົມສຳລັບສະມາຊິກຂອງສະມາຄົມ



*Die Töpfe aus Granit wiegen bis zu 14 Tonnen.*
ໄຫຫີນທີ່ເຮັດດ້ວຍຫີນແກຣນິດມີນຳໜັກເຖິງ 14 ໂຕນ

## Winterthur

Die Burg thront etwa 10 km südlich des Kantonsspitals Winterthur auf einem steilen Hügel über dem Fluss Töss, der auch durch die Stadt Winterthur fliesst. Im 11. Jahrhundert als Zufluchtsort für die Bevölkerung der Umgebung erbaut, wurde sie 1865 zum ersten Burgmuseum der Schweiz umgebaut und der Öffentlichkeit zugänglich gemacht. Heute werden hier Ausstellungen zu den früheren Herrschern und deren Lebensstil präsentiert. Von Frühling bis Herbst sind die Tore für Anlässe, Führungen und Schulklassenbesuche geöffnet. Schülerinnen und Schüler sind stets sehr beeindruckt von der «eisernen Jungfrau», einem furchteinflössenden Folterinstrument, das seit 900 Jahren im Keller des Schlosses steht. Rund um die Kyburg gibt es zahlreiche Wanderwege, und auf dem Grundstück findet man einen Schlossgarten, in dem heute noch Gewürz- und Heilkräuter wachsen. Von den Mauern der Kyburg aus können die Besucherinnen und Besucher den Blick in die Ferne schweifen lassen – wie einst die Ritter im Mittelalter, wenn sie nach Feinden Ausschau hielten.

## ເມືອງວິນເຕີທົວ

ປາສາດນີ້ຕັ້ງຢູ່ຫ່າງຈາກໂຮງໝໍ Kantonsspital Winterthur ໄປທາງທິດໃຕ້ປະມານ 10 ກມ. ຕັ້ງຢູ່ເນີນສູງ ຊັນເທິງແມ່ນ້ຳເທິດ (Töss) ທີ່ໄຫລຜ່ານເມືອງ Winterthur ເຊັ່ນກັນ. ເມື່ອສັດຕະວັດທີ 11 ໄດ້ສ້າງປາສາດນີ້ຂຶ້ນເພື່ອເປັນ ທີ່ລີ້ໄພໃຫ້ແກ່ປະຊາຊົນໃນທ້ອງຖິ່ນ ແລະເມື່ອປີ 1865 ຈິ່ງໄດ້ ສ້າງປາສາດນີ້ໃຫ້ກາຍເປັນປາສາດພິພິດຕະພັນແຫ່ງທຳອິດຂອງ ປະເທດສະວິດ ພ້ອມກັບເປີດໃຫ້ຜູ້ຊົມເຂົ້າທ່ຽວຊົມໄດ້ຢ່າງເປັນ ທາງການ. ປັດຈຸບັນທີ່ນີ້ຈະມີການວາງສະແດງກ່ຽວກັບກະສັດແລະ ວິຖີການດຳລົງຊີວິດຂອງພວກເຂົາໃນສະໄໝກ່ອນ. ໃນຊ່ວງເວລາ ລະຫວ່າງ ລະດູໃບໄມ້ລົ່ນແລະລະດູໃບໄມ້ປົ່ງ ພິພິດຕະພັນນີ້ຈະ ເປີດໃຫ້ໃຊ້ບໍລິການສຳລັບງານຕ່າງໆ ມີການແນະນຳອະທິບາຍ ແລະ ສຳລັບທັດສະນະສຶກສາໃຫ້ແກ່ນັກຮຽນ ບັນດານັກຮຽນທັງຫຼາຍ ຈະຕື່ນຕາປະທັບໃຈກັບ «ນາງສາວບໍລິສຸດທີ່ແຂງແກ່ນ» ແລະ ເຄື່ອງມືໃຊ້ທໍລະມານຄົນອັນໜ້າກົວ ເຄື່ອງມືນີ້ຕັ້ງໄວ້ຢູ່ຊັ້ນໃຕ້ດິນ ຂອງປາສາດໄດ້ 900 ປີມາແລ້ວ. ບໍລິເວນອ້ອມຂ້າງ ກີບວກນີ້ ຍັງ ມີຮ່ອມທາງສຳລັບເດີນປ່າຫຼາຍເສັ້ນ, ພາຍໃນເດີ່ນຂອງປາສາດຍັງ ມີສວນອັນເປັນບ່ອນທີ່ມີພືດສະໝຸນໄພແລະເຄື່ອງຫອມຫຼາຍ ປະເພດເກີດຂຶ້ນສວຍງາມ. ຢູ່ເທິງກຳແພງຂອງປາສາດທ່ານຜູ້ຊົມ ຍັງສາມາດມອງໄປໃນວິວທັດທີ່ກວ້າງໄກ ເໝືອນກັບອັດສະຫວິນ ໃນສະໄໝບູຮານທີ່ພວມກຳລັງຢືນມອງຍາມຕ້ານສັດຕູໃນສະໄໝ ກ່ອນ



*Auch der ehem. Spitaldirektor Dr. Komua und seine Frau waren während ihres Besuchs in Winterthur auf der Kyburg.*
ອະດີດອຳນວຍການໂຮງໝໍ ທ່ານ ກົວມົວພ້ອມດ້ວຍພັນລະຍາກໍ່ໄດ້ໄປ ທ່ຽວຊົມປາສາດ ກີບູຣກ ເມື່ອງໃນໂອກາດໄປຢ້ຽມຢາມເມືອງວິນເຕີທົວ

ESSEN | ອາຫານການກິນ

# «Kin khao laeo boo? – Hast du schon gegessen?» «ຫັດ ດູ ໂຊນ ເກເກັດເຊັນ? – ກິນເຂົ້າແລ້ວບໍ່?»



*Laab ist das laotische Nationalgericht. Die Bezeichnung stammt von «Sook Laab», was «Viel Glück» bedeutet – auch in materiellem Sinne. Für das Laab verwendet man in Xiengkhouang aktuell am liebsten Trutenfleisch, denn Rindfleisch gilt je nach Situation als ungesund. Laab wird an allen wichtigen Zeremonien als eines von bis zu zehn Gerichten aufgetischt. Die richtige Kräuter- und Gewürzmischung von Laab ist jeweils ein gut gehütetes Familiengeheimnis.*

## Das originale laotische Nationalgericht: Laab mit Trutenfleisch

GEKOCHT VON **KINA SAYNAMKHA**

**Zutaten für 4 Personen** (kein Hauptgericht)

| | |
|---|---|
| 300 g | Rinds-, Schweine-, oder Trutengeschnetzeltes |
| 6–10 St. | Spargelbohnen |
| 3 | frische Chilischoten sehr fein geschnitten |
| 4 | Schalotten fein gehackt |
| 2,5 TL | Fischsauce |
| 3–4 TL | Limettensaft |
| 3 EL | Reispulver geröstet – ein Muss! |
| 2 TL | Chilipulver |
| 4–5 Zweige | Frische Pfefferminze fein gehackt |
| 3–5 | Frühlingszwiebeln gehackt |
| 1/2 Bund | Koriander gehackt |
| 1 T | Röstzwiebeln |
| 3 | Knoblauchzehen fein gehackt |
| 2–4 Stängel | Zitronengras fein geschnitten |
| 2 cm | Galgant |
| 1 | Gurke in Stängel geschnitten |

**Zubereitung:**
Das Fleisch in einer Bratpfanne ohne Öl bei mittlerer Hitze gut durchbraten. Danach die Pfanne vom Herd nehmen.

- Für die Sauce Fischsauce, Limettensaft und Chilischoten in einer Schüssel vermengen. Wer es scharf mag, kann zusätzlich Chilipulver beigeben.
- Für das Reispulver rohen Klebreis goldbraun rösten und zu Pulver mixen.
- Reispulver, Spargelbohnen, Zitronengras, Knoblauch und das Fleisch zur Sauce geben und alles gut vermischen.
- Zuletzt Frühlingszwiebeln, Koriander und Pfefferminzblätter beigeben.
- Auf dem Teller mit Röstzwiebeln bestreuen und mit Gurkenstängeln garniert servieren.

GEWUSST?

Das Essen hat in Laos eine zentrale soziale, aber auch eine medizinische Rolle. So werden in der Volksmedizin für unterschiedliche Krankheitszustände gewisse Speisen als ungünstig oder gar verboten angenommen – für die Verpflegung der Patientinnen und Patienten eine Herausforderung!

**TÄGLICH GEKOCHTE MITTAGESSEN AM KSW**
ຈຳນວນອາຫານທ່ຽງທີ່ ຈັດແຕ່ງແຕ່ລະມື້ ໃນໂຮງໝໍ KSW

1300










*Die Menüs für die Patientinnen und Patienten werden wortwörtlich am Fliessband zubereitet.* ເມນູ ອາຫານສຳລັບຄົນເຈັບຈະຖືກຈັດແຕ່ງເປັນລະບົບຢ່າງເລື່ອນໄຫລເທິງໂຕະເລື່ອນ

# ເຮືອນຄົວຂອງໂຮງໝໍ KSW ຈະເປັນໂລກນ້ອຍໜ່ອຍໜຶ່ງສະເພາະຕົນ
# Die Küche am KSW ist ihre eigene kleine Welt

ເວລາເຮົາເປີດປະຕູເຮືອນຄົວຂອງໂຮງໝໍ KSW ເຂົ້າໄປຍາມໃດ ເຮົາຈະໄດ້ດົມກິ່ນເປັນຮ້ອຍໆປະເພດໃນທັນໃດ ແລະພາຍໃຕ້ສຽງຖ້ວຍຊາມເຮົາຈະໄດ້ຍິນສຽງສັ່ງບອກກັນລະວ່າງພະນັກງານຫ້ອງຄົວ. ປະມານ 60 ຄົນທີ່ມາຈາກ 22 ປະເທດ ມາເຮັດວຽກຫ້ອງຄົວຮ່ວມກັນເພື່ອສະໜອງອາຫານການກິນໃຫ້ແກ່ພະນັກງານໂຮງໝໍຈຳນວນ 3500 ຄົນ ແລະຄົນເຈັບເກືອບ 30000 ຄົນຕໍ່ປີ. «ພວກເຮົາ ເປັນທີມງານທີ່ມີຊີວິດຊີວາ ແລະ ເຖິງແມ່ນວ່າເຮົາຈະຖືກກົດດັນຮີບດ່ວນປານໃດກໍ່ຕາມ ພວກເຮົາກໍ່ບໍ່ຖິ້ມອາລົມຂັນຂອງເຮົາ» ທ່ານ Andreas Kern ຫົວໜ້າເຮືອນຄົວ ກ່າວ. ຖ້າມີກິດຈະກຳ ອາທິດອາຫານລາວ ຫ້ອງຄົວຂອງໂຮງໝໍ KSW ກໍ່ຈະແຕ່ງອາຫານເມນູເດັ່ນຈາກປະເທດຕາເວັນອອກ - ກຳໄລທີ່ໄດ້ຈາກການຂາຍອາຫານກໍ່ຈະໝູນໄປບໍລິຈາກ

Wenn sich die Türen der Spitalküche am KSW öffnen, wehen einem hunderte Gerüche entgegen und über das Klirren von Geschirr rufen sich die Leute Anweisungen zu. Rund 60 Personen aus 22 Nationen versorgen zusammen über 3500 Mitarbeitende und jährlich fast 30 000 Patientinnen und Patienten. «Wir sind eine lebhafte Gemeinschaft und auch wenn wir oft unter Zeitdruck stehen, verlieren wir nie den Humor.» verrät uns Andreas Kern, Leiter Küche. Während der kulinarischen Laos-Woche kocht die Spitalküche am KSW feine Gerichte aus Fernost – der Gewinn wird gespendet.



*So wird am KSW laotisch gekocht: Rindsentrecote «Ping Sin Ngua» mit gebratenem Reis und Tomatensauce «Jeow Mak» – dazu Papayasalat*
ການແຕ່ງອາຫານລາວທີ່ໂຮງໝໍ KSW ກໍ່ຈະເປັນແບບນີ້: «ປີ້ງຊີ້ນງົວ» ກັບເຂົ້າຜັດແລະແຈ່ວໝາກເລັ່ນ - ເສີບກັບຕຳໝາກຫຸ່ງ



*Auch in der Spitalküche wird vor allem von Hand gekocht.*
ຢູ່ເຮືອນຄົວຂອງໂຮງໝໍ ສ່ວນຫລາຍແລ້ວກໍ່ຍັງແຕ່ງກິນດ້ວຍມືລ້ວນໆ

INTENSIVPFLEGE | ພະແນກມໍລະສຸ ມ

# Auf der Intensivstation zählt jede Sekunde ຢູ່ພະແນກມໍລະສຸມ ເວລາແຕ່ລະວິນາທີແມ່ນມີຄຸນຄ່າທີ່ສຸດ

*Für die Arbeit auf der Intensivstation am KSW haben die Mitarbeitenden in der Intensivpflege eine Zusatzausbildung – nicht so in Laos. Für die Behandlung der Patientinnen und Patienten nach einer Operation oder einem schweren Unfall geben sie aber in beiden Spitälern alles – Feiertage inklusive.*
ສໍາລັບວຽກສະເພາະຢູ່ພະແນກມໍລະສຸມຂອງໂຮງໝໍ KSW ພະນັກງານພະແນກມໍລະສຸມຕ້ອງໄດ້ໄປຮຽນເພີ່ມສະເພາະໜ້າວຽກນີ້ - ແຕ່ວ່າ ແບບນີ້ບໍ່ມີຢູ່ປະເທດລາວ. ແຕ່ວ່າພະນັກງານຂອງໂຮງໝໍທັງສອງແຫ່ງກໍ່ທຸ້ມເທສຸດຄວາມສາມາດເພື່ອປິ່ນປົວຄົນເຈັບຫຼັງຈາກຜ່າຕັດແລ້ວ ຫຼືກໍລະນີອຸບັດຕິເຫດເຈັບສາຫັດ - ໃນວັນພັກກໍ່ບໍ່ເວັ້ນວ່າງ.



## Winterthur

**Martina Keller** hat schon ihr Vorpraktikum am Kantonsspital Winterthur (KSW) gemacht und arbeitet nun nach diversen Anstellungen an anderen Spitälern als Leitung Pflege im Zentrum für Intensivmedizin am KSW.

*Bitte schildere deinen beruflichen Werdegang. Wie kamst du zu deiner heutigen Anstellung?*
Gestartet habe ich mit einem Vorpraktikum am KSW, anschliessend habe ich die Grundausbildung absolviert.

«Es ist ein Beruf, der unheimlich viel zurückgibt.»

Nach insgesamt sechs Jahren am KSW wechselte ich nach Bern in die Intensivmedizin am Inselspital und absolvierte dort das NDS Intensivpflege. Nachdem ich insgesamt drei Jahre in Bern gearbeitet hatte, wechselte ich zur Privatklinik Lindberg in Winterthur. Zuerst übernahm ich die stellvertretende Leitung IPS, Aufwachraum, Tagesklinik und Privatnotfall, später war ich für die Hauptleitung verantwortlich, bis ich dann 2017 nach insgesamt elf Jahren für meine jetzige Funktion wieder ans KSW kam. Im Frühjahr 2022 habe ich den Master in Managed Health Care abgeschlossen. Im Gesundheitswesen in der Schweiz werden hohe Anforderungen an die fachspezifischen Ausbildungen und an die Qualifikationen für die Tätigkeit auf der Intensivstation gestellt.





*Auf der Intensivstation ist immer etwas los.*
ຢູ່ພະແນກສຸກເສີນຈະມີເຫດການໃດໜຶ່ງເກີດຂຶ້ນຕະຫຼອດ

## Phonsavan

**Monmanee Sybounheuang** kam als freiwillige Mitarbeiterin ans Provinzspital Xiengkhouang. Nach ihrer Ausbildung in der Pflege arbeitet sie nun auf der Intensivstation und dem Notfall.

*Warum hast du dich selbst für die Arbeit auf der Intensivstation entschieden?*
Ich musste nachts manchmal Dienst in der Notaufnahme oder auf der Intensivstation leisten. Diese Arbeit gefiel mir ausnehmend gut, und nachdem ich einige Jahre Berufserfahrung in der Inneren Medizin gesammelt hatte, bekam ich die Chance, in den Pflegepool Intensivpflege/Notfall zu wechseln.

«Wenn es schwerkranken Patientinnen und Patienten besser geht, empfinde ich grosses Glück.»

*Was sind die grössten Schwierigkeiten bei der Arbeit auf der Intensivstation?*

*Was gefällt dir an deiner beruflichen Tätigkeit besonders gut?*
An meiner Tätigkeit gefallen mir besonders die interprofessionelle Zusammenarbeit und die abwechslungsreiche, spannende Tätigkeit in der Intensivmedizin. Die sich rasch ändernden Situationen und die damit verbundenen Herausforderungen bereichern meinen Berufsalltag. Diese aussergewöhnlichen Situationen gemeinsam meistern zu können, schätze ich sehr. Ich schätze den Kontakt und den Austausch unter den verschiedenen Berufsgruppen wie auch die Begleitung und die fachliche Unterstützung meines Teams in der ganzen Bandbreite der individuellen Lebensabschnitte und Herausforderungen. Alltag in der Intensivpflege – «viel Verantwortung und täglich neue Herausforderungen.»

*Gibt es etwas, was dich stört?*
Was mich beschäftigt, ist der aktuelle Fachkräftemangel und die damit verbundene Belastung des Teams.



*Frau Monmanee misst regelmässig den Blutdruck ihrer Patientinnen und Patienten.*
ນາງ ມົນມະນີ ວັດແທກຄວາມດັນໃຫ້ບັນດາຄົນເຈັບຢ່າງເປັນປະຈຳ



*Martina Keller im Gespräch mit einer Angehörigen.* ນາງ ມາຣຕິນາ ເຄນເລີ (Martina Keller) ໂອ້ລົມກັບພີ່ນ້ອງຂອງຄົນເຈັບ

Es gibt viele schwierige Situationen, aber das Hauptproblem ist der Mangel an Geräten und Material – und der Personalmangel. Weil wir immer mehr Patientinnen und Patienten zu betreuen haben, bleibt uns wenig Zeit für unsere Familien und zum Entspannen.

*Wird die Arbeit auf der Intensivstation besser bezahlt als jene auf einer normalen Station?*
Nein, die Entlöhnung ist einheitlich. Alle Krankenschwestern, die den gleichen Ausbildungsstand vorweisen können und die gleiche Position innehaben, verdienen gleich viel. Wie viel wir arbeiten müssen oder welche Anforderungen die Arbeit mit sich bringt, spielt für das Gehalt keine Rolle.

*Was wünschst du dir vom Projekt Spitalpartnerschaft und von den Schweizer Beteiligten?*
Die Teams aus der Schweiz bringen uns immer wieder Geräte oder Material mit, die bei uns fehlen. Das schätzen wir enorm. Noch wichtiger ist aber, dass wir viel von ihnen lernen können und sie uns in jeder Hinsicht helfen. Das ermöglicht es uns, unsere Patientinnen und Patienten effizienter zu behandeln. Ich wünsche mir, dass es noch möglichst viele Einsätze gibt.

*Was wünschst du dir für die Zukunft?*
Dass die Mitarbeitenden an den neuen medizinischen Materialien geschult werden, damit sie die Patientinnen und Patienten effizient behandeln können.



*Nach dem Aufstehen ist noch etwas Gehhilfe nötig.*
ຫລັງຈາກລຸກຂຶ້ນໄດ້ແລ້ວ ກໍ່ຍັງຕ້ອງການຄວາມຊ່ວຍເຫຼືອອີກຢູ່ໜ້ອຍໜຶ່ງ

### ເມືອງໂພນສະຫວັນ

ນາງມົນມະນີ ສີ ບຸ ນເຮື ອງ ອາຍຸ 37 ປີ ເຮັດວຽກປະຈຳການຢູ່ ພະແນກມໍລະສຸ ມ ຂັ້ ນພື້ ນຖານອາຊີ ບນີ້ ລາວໄດ້ຮຽນຈົບເມື່ ອປີ 1998/1999 ທີ່ ເມື ອງຄູ ນ. ເມື່ ອປີ 2002 ລາວໄດ້ໄປເປັ ນແພດອາສາຢູ່ ໂຮງໝໍແຂວງຊຽງຂວາງ ຫຼັ ງຈາກນັ້ ນລາວໄດ້ໄປຮຽນພະຍາບານຢູ່ ແຂວງຫຼ ວງພະບາງ. ແຕ່ປີ 2013 ເຖິງ 2015 ນາງມົນມະນີ ສີ ບຸ ນເຮື ອງ ໄດ້ໄປສຶ ກສາຢູ່ ທີ່ ມະຫາວິ ທະຍາໄລວິ ທະຍາສາດສຸ ຂະພາບທີ່ ນະຄອນຫຼ ວງວຽງຈັ ນ ທີ່ ນີ້ ລາວໄດ້ຮຽນຈົບຊັ້ ນປະລິ ນຍາຕຣີ . ທ້າຍສຸ ດ ລາວໄດ້ລົງປະຕິ ບັດພາຍໃນມະຫາວິ ທະຍາໄລດັ່ ງກ່າວໃນຂະແໜງການພະຍາບານແລະປິ່ ນປົ ວເປັ ນເວລາ 12 ເດື ອນ ແລະຈົບລົງເມື່ ອປີ 2022

ເຈົ້າໄດ້ຕັດສິນໃຈເລືອກເອງບໍ່ທີ່ເຈົ້າມາເຮັດວຽກຢູ່ພະແນກມໍລະສຸມນີ້?
ເບື້ອງຕົ້ນຂ້ອຍເປັນພະນັກງານປະຈຳການຢູ່ພະແນກການແພດພາຍໃນ ບາງຄັ້ງຂ້ອຍກໍ່ຮັບໜ້າທີ່ໃນພະແນກສຸກເສີນແລະມໍລະສຸມເຊັ່ນກັນ ແລ້ວໜ້າວຽກນີ້ເຫັນວ່າມັນມື້ນັບຖືກໃຈຂ້ອຍໄປ

## «ນີ້ແມ່ນອາຊີບທີ່ສົ່ງຜົນຕອບແທນຄືນໃຫ້ເຮົາຫຼາຍ»

ເລື້ອຍໆ ແລະຫຼັງຈາກທີ່ຂ້ອຍໄດ້ສະສົມປະສົບການໃນພາກການແພດພາຍໃນຫຼາຍປີແລ້ວ ຂ້ອຍຈິ່ງມີໂອກາດປ່ຽນເຂົ້າມາໜ່ວຍກຽມພ້ອມພະຍາບານ ໃນພາກພະຍາບານມໍລະສຸມແລະພະຍາບານສຸກເສີນ

ແມ່ນຫຍັງທີ່ຖືວ່າເປັນສິ່ງທີ່ຫຍຸ້ງຍາກທີ່ສຸດໃນໜ້າວຽກຢູ່ພະແນກມໍລະສຸມ?
ທີ່ຈິງແລ້ວກໍ່ມີສະຖານະການຫຍຸ້ງຍາກເລື້ອຍຢູ່ ແຕ່ບັນຫາຫຼັກໆກໍ່ຄືຄວາມຂາດແຄນດ້ານເຄື່ອງມືແລະອຸປະກອນ ແລະດ້ານບຸກຄະລາກອນ. ເນື່ອງຈາກວ່າ ເຮົາມີຄົນເຈັບທີ່ຕ້ອງດູແລຫຼາຍຂຶ້ນເລື້ອຍໆ ເຮົາກໍ່ເລີຍບໍ່ມີເວລາພຽງພໍໃຫ້ກັບຄອບຄົວຕົນເອງແລະເວລາທີ່ຈະຜ່ອນຄາຍ

ວຽກຢູ່ພະແນກມໍລະສຸມນີ້ເປັນວຽກທີ່ໄດ້ເງິນເດືອນດີກວ່າວຽກຢູ່ໃນພະແນກອື່ນໆບໍ່?
ບໍ່, ເງິນເດືອນທຸກພະແນກເປັນເອກະພາບກັນ. ພະຍາບານທຸກຄົນທີ່ໄດ້ຮຽນລະດັບດຽວກັນແລະມີຕຳແໜ່ງຊັ້ນດຽວກັນ ກໍ່ຈະໄດ້ເງິນເດືອນເທົ່າກັນ. ໃຜຈະເຮັດວຽກຫຼາຍປານໃດ ຫຼືວ່າມີໜ້າທີ່ຮັບຜິດຊອບສູງປານໃດ ອັນນີ້ຈະບໍ່ມີຄວາມໝາຍຕໍ່ການວາງເງິນເດືອນ.

ເຈົ້າມີຄວາມຫວັງແນວໃດຕໍ່ກັບໂຄງການຮ່ວມມືລະຫວ່າງໂຮງໝໍນີ້ ແລະຕໍ່ກັບຄູ່ຮ່ວມມືຈາກສະວິດ?
ທີມງານຈາກສະວິດຈະເອົາເຄື່ອງມືຫຼືອຸປະກອນຕ່າງໆມາໃຫ້ພວກເຮົາ ສ່ວນຫຼາຍຈະເປັນເຄື່ອງທີ່ພວກເຮົາຍັງບໍ່ທັນມີ. ນ້ຳໃຈນີ້ພວກເຮົາຍົກສູງເປັນພິເສດ. ແຕ່ຍິ່ງສຳຄັນກວ່ານັ້ນກໍ່ຄືທີ່ ພວກເຮົາໄດ້ຮຽນຮູ້ນຳພວກເຂົາ ແລະພວກເຂົາຊ່ວຍເຫຼືອພວກເຮົາໃນທຸກດ້ານ. ຜົນກໍ່ຄືວ່າ ເຮົາສາມາດປິ່ນປົວຄົນເຈັບໂດຍມີປະສິດທິພາບດີຂຶ້ນ. ທຸກຄັ້ງທີ່ທີມງານຈາກສະວິດມາທີ່ນີ້ ພວກເຮົາຈະຮຽນຮູ້ແລະສະສົບປະສົບການອັນລ້ຳຄ່າຈາກພວກເຂົາມາຕະຫຼອດ. ສະນັ້ນຂ້າພະເຈົ້າເອງຈິ່ງຢາກໃຫ້ມີການແລກປ່ຽນແບບນີ້ຫຼາຍຄັ້ງຂຶ້ນເທົ່າທີ່ເປັນໄປໄດ້.

ເຈົ້າປາຖະໜາຫຍັງເພື່ອອະນາຄົດ?
ຂ້ອຍປາຖະໜາຢາກໃຫ້ບັນດາພະນັກງານໃນທຸກໜ່ວຍງານ ໄດ້ຮຽນລົງເລິກໃນການໃຊ້ງານອຸປະກອນການແພດໃໝ່ໆ ເພື່ອເຮັດໃຫ້ພວກເຂົາສາມາດປິ່ນປົວຄົນເຈັບຍິງຊາຍຢ່າງມີປະສິດທິພາບ



*Auch gefährliche Krankheiten wie Tetanus werden im XKHPH mit einfachen Mitteln behandelt.* ຢູ່ໂຮງໝໍແຂວງຊຽງຂວາງ ໂລກພະຍາດອັນຕະລາຍເຊັ່ນເຕຕານຸດ ກໍ່ຈະປິ່ນປົວດ້ວຍຢາຊະນິດງ່າຍໆ ເຊັ່ນກັນ



*Die Ergebnisse der Visite werden gemeinsam festgehalten.* ຜົນຂອງການກວດກໍ່ນຳມາສະຫຼຸບແລະບັກທຶກຮ່ວມກັນ



*Auch Physiotherapie gehört zur Intensivpflege.* ກາຍຍະບຳບັດກໍ່ແມ່ນສ່ວນໜຶ່ງຂອງການພະຍາບານມໍລະສຸມ

### ເມື ອງວິ ນເຕີ ທົວ

**Martina Keller** ມີ ໜ້າທີ່ ເປັ ນຫົວໜ້າພະແນກພະຍາບານຢູ່ ທີ່ ສູ ນການແພດມໍລະສຸ ມຂອງໂຮງໝໍ Kantonsspital Winterthur ແລະດ້ວຍນີ້ ລາວໄດ້ເປີ ດໂອກາດໃຫ້ ມອງເຫັ ນເບື້ ອງຫຼັ ງຂອງວຽກປະຈຳວັ ນຂອງລາວ

ກະລຸນາຈົ່ງເລົ່າເລື່ອງຄວາມເປັນມາຂອງອາຊີບເຈົ້າແດ່ ເຈົ້າເຂົ້າມາຮັບໜ້າວຽກທີ່ມີໃນປັດຈຸບັນນີ້ ແນວໃດ?
ທຳອິດຂ້ອຍໄດ້ລົງຝຶກງານຢູ່ໂຮງໝໍ KSW ຈາກນັ້ນຂ້ອຍກໍ່ໄດ້ຮຽນຈົບວິຊາຊີບຂັ້ນພື້ນຖານ (ແຕ່ກ່ອນເອີ້ນວ່າ ປະລິນຍາລະດັບສອງ, ລົງເລິກພາກພະຍາບານສຸກເສີນ, ທັງໝົດຮຽນສີ່ປີ ແລ້ວຈົບປະລິນຍາ)
ຫຼັງຈາກທີ່ຂ້ອຍໄດ້ເຮັດວຽກຢູ່ໂຮງໝໍ KSW ເປັນເວລາທັງໝົດຫົກ ປີ ຂ້ອຍກໍ່ໄດ້ຍ້າຍໄປເຮັດວຽກຢູ່ເມືອງແບນ ເຮັດຢູ່ໂຮງໝໍ Inselspital ພະແນກການແພດມໍລະສຸມ ທີ່ນັ້ນຂ້ອຍໄດ້ສຶກສາ

## «ມີຄວາມຮັບຜິດຊອບສູງແລະທຸກມື້ມີການທ້າທາຍໃໝ່ເລື້ອຍໆ»

ຕໍ່ປະລິນຍາໃນວິຊາ ພະຍາບານມໍລະສຸມ (ສຶກສາຕໍ່ປະລິນຍາໃຊ້ເວລາທັງໝົດ ສອງປີ) ຫຼັງຈາກທີ່ຂ້ອຍໄດ້ເຮັດວຽກຢູ່ເມືອງແບນເວລາ ສາມ ປີ ຂ້ອຍກໍ່ໄດ້ຍ້າຍໄປຄລີນິກເອກະຊົນ Lindberg (Swiss Medical Network) ທີ່ Winterthur. ເບື້ອງຕົ້ນຂ້ອຍໄດ້ເປັນຜູ້ຮອງຫົວໜ້າ IPS ຫ້ອງພັກຟື້ນ ພະແນກຄລີນິກເຄິ່ງມື້ແລະພະແນກສຸກເສີນເອກະຊົນ ຈາກນັ້ນຂ້ອຍກໍ່ໄດ້ຮັບໜ້າທີ່ເປັນຫົວໜ້າໃຫຍ່ຂອງບັນດາພະແນກທີ່ກ່າວມານັ້ນຈົນເຖິງປີ 2017 ເປັນເວລາທັງໝົດ ສິບເອັດປີ ແລ້ວຂ້ອຍຈິ່ງໄດ້ມາຮັບໜ້າທີ່ຢູ່ໂຮງໝໍ KSW ໃນປັດຈຸບັນນີ້ ຕົ້ນປີ 2022 ຂ້ອຍໄດ້ຮຽນຈົບປະລິນຍາໂທໃນວິຊາການຈັດການບໍລິຫານການດູແລສຸຂະພາບ (Managed Health Care) ໃນລະບົບສາທາລະນະສຸກທີ່ປະເທດສະວິດນີ້ ໜ້າວຽກພາຍໃນພະແນກການແພດມໍລະສຸມຕ້ອງການບຸກຄະລາກອນຜູ້ມີຄຸນວຸທິແລະການສຶກສາວິຊາສະເພາະທີ່ມີມາດຖານສູງເທົ່ານັ້ນ

ແມ່ນຫຍັງອັນເປັນສິ່ງທີ່ເຈົ້າມັກພິເສດໃນອາຊີບຂອງເຈົ້າ?
ສິ່ງທີ່ຂ້ອຍມັກເປັນພິເສດໃນວຽກຂ້ອຍນີ້ ແມ່ນການຮ່ວມມືກັນລະຫວ່າງຫລາຍວິຊາການທີ່ແຕກຕ່າງກັນ ແລະການເຮັດວຽກຢູ່ພະແນກການແພດມໍລະສຸມນີ້ເປັນວຽກທີ່ບໍ່ຊ້ຳຊາກແລະໜ້າຕື່ນເຕັ້ນຕະຫຼອດ ສະຖານະການມີການປ່ຽນແປງເລື້ອຍແລະໄວວາເຮັດໃຫ້ມາການທ້າທາຍໃໝ່ເລື້ອຍໆເກີດຂຶ້ນ ສິ່ງເລົ່ານີ້ມັນເຮັດໃຫ້ວຽກປະຈຳວັນຂອງຂ້ອຍບໍ່ຊ້ຳຊາກ ທີ່ເຮົາຮ່ວມແຮງກັນຮັບມືກັບບັນດາສະຖານະການພິເສດໃຫ້ສຳເລັດນີ້ ເປັນສິ່ງທີ່ຂ້ອຍຕີລາຄາສູງສະເໝີ

ຂ້ອຍໃຫ້ຄວາມສຳຄັນຫຼາຍຕໍ່ຄວາມຜູກພັນແລະການແລກປ່ຽນເຊິ່ງກັນແລະກັນລະຫວ່າງບັນດາກຸ່ມອາຊີບຕ່າງໆ ກໍ່ຄືການຊີ້ນຳນຳພາແລະການຊ່ວຍເຫຼືອດ້ານວິຊາການຂອງທີມງານຂອງຂ້ອຍ ໃຫ້ແກ່ເພື່ອນຮ່ວມງານໃນທຸກຂົງເຂດຂອງຂັ້ນຕອນຊີວິດກໍ່ຄືພາລະໜ້າທີ່ຂອງແຕ່ລະຄົນ
ວຽກປະຈຳວັນຢູ່ພະແນກພະຍາບານມໍລະສຸມ - «ມີຄວາມຮັບຜິດຊອບສູງແລະທຸກມື້ມີການທ້າທາຍໃໝ່ເລື້ອຍໆ»

ມີສິ່ງໃດໜຶ່ງບໍ່ ອັນເປັນສິ່ງທີ່ລຳຄານສຳລັບເຈົ້າ?
ສິ່ງທີ່ເຮັດໃຫ້ຂ້ອຍຄິດເປັນປະຈຳ ກໍ່ຄືຄວາມຂາດແຄນແຮງງານວິຊາການແລະຄວາມກົດໜ່ວງທຳງານເນື່ອງຈາກຄວາມຂາດແຄນດັ່ງກ່າວ